SACOMBANK

# ບົດລາຍງານ ຖານະການເງິນ
# ປະຈຳປີ 2025



# ສາລະບານ


| | |
|---|---|
| ຄຳເຫັນຂອງປະທານສະພາບໍລິຫານ | **2 - 3** |
| ວິໄສທັດ - ພາລະກິດ - ຄຸນຄ່າແກ່ນສານ | **4 - 5** |
| ເຫດການພົ້ນເດັ່ນ ປະຈຳປີ 2025 | **8 - 11** |
| ປະຫວັດຄວາມເປັນມາ ແລະ ການຂະຫຍາຍຕົວ | **12 - 13** |
| ໂຄງຮ່າງການຈັດຕັ້ງ | **15** |
| ຄະນະສະພາບໍລິຫານ | **16 - 17** |
| ຄະນະອຳນວຍການໃຫຍ່ | **18 - 19** |
| ຂໍ້ມູນທົ່ວໄປກ່ຽວກັບທະນາຄານ | **20** |
| ຄວາມຮັບຜິດຊອບຂອງຄະນະຜູ້ບໍລິຫານ ຕໍ່ເອກະສານລາຍງານການເງິນ | **21** |
| ບົດລາຍງານຂອງນັກກວດສອບອິດສະລະ | **22- 23** |
| ໃບລາຍງານຖານະການເງິນ | **24** |
| ໃບລາຍງານກຳໄລ ຫຼື ຂາດທຶນ ແລະ ສັງລວມລາຍຮັບອື່ນໆ | **25** |
| ໃບລາຍງານການປ່ຽນແປງຂອງທຶນ | **26 - 27** |
| ໃບລາຍງານກະແສເງິນສົດ | **28** |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | **29 - 49** |






# ຄຳເຫັນຂອງປະທານ

**ສານຈາກປະທານສະພາຜູ້ບໍລິຫານ**
**ຊາຄອມແບັງ ລາວ ໃນບົດລາຍງານປະຈຳປີ 2025**
**ຮຽນ: ທ່ານຜູ້ຖືຫຸ້ນ, ບັນດາຄູ່ຮ່ວມທຸລະກິດ ແລະ ລູກຄ້າທີ່ຮັກແພງ!**

ປີ 2025 ແມ່ນປີທີ່ມີຄວາມໝາຍສຳຄັນຢ່າງຍິ່ງສຳລັບການດຳເນີນງານຂອງ ຊາຄອມແບັງ ລາວ. ພາຍໃຕ້ການຊີ້ນຳ-ນຳພາຢ່າງມຸ່ງໝັ້ນ, ເປັນເຈົ້າການ ແລະ ສ້າງສັນຂອງຄະນະຜູ້ບໍລິຫານ; ຄຽງຄູ່ກັບຈິດໃຈສາມັກຄີ, ລະບຽບວິໄນ ແລະ ຄວາມຮັບຜິດຊອບຂອງພະນັກງານທົ່ວອົງກອນ; ພ້ອມດ້ວຍຄວາມເຊື່ອໝັ້ນ ແລະ ການສະໜັບສະໜູນອັນດີຈາກທ່ານຜູ້ຖືຫຸ້ນ, ຄູ່ຮ່ວມທຸລະກິດ ແລະ ລູກຄ້າ, ຊາຄອມແບັງ ລາວ ສາມາດບັນລຸບັນດາຄາດໝາຍທີ່ວາງໄວ້ຢ່າງຈົບງາມ. ຮັບປະກັນການກ້າວເຂົ້າສູ່ຮອບວຽນຍຸດທະສາດໃໝ່ ດ້ວຍຄວາມເປັນເຈົ້າການ, ມີພື້ນຖານພາຍໃນທີ່ແຂງແກ່ນ ແລະ ວິໄສທັດອັນຍາວໄກ.

ໃນປີ 2025, ເຖິງແມ່ນວ່າສະພາບການໂລກຍັງສືບຕໍ່ຜັນຜວນຢ່າງຊັບຊ້ອນ, ເຕັມໄປດ້ວຍຄວາມທ້າທາຍ ແລະ ຄວາມຫຍຸ້ງຍາກຫຼາຍກວ່າໂອກາດ, ແຕ່ ສປປ ລາວ ກໍຍັງສາມາດບັນລຸຜົນສຳເລັດສຳຄັນຫຼາຍດ້ານ ແລະ ສ້າງຂີດໝາຍໃໝ່ໃນການພັດທະນາ ໂດຍການປັບປຸງໂຄງສ້າງກົງຈັກລັດເຊັ່ນວ່າ: ຫຼຸດລົງຈາກ 17 ກະຊວງ ແລະ 3 ອົງການທຽບເທົ່າກະຊວງ ມາເປັນ 13 ກະຊວງ ແລະ 2 ອົງການທຽບເທົ່າ; ອັດຕາໜີ້ສິນສາທາລະນະຫຼຸດລົງຈາກ 112% ມາເປັນ 88% ຂອງ GDP; ອັດຕາເງິນເຟີ້ຫຼຸດລົງຈາກ 23% ມາເປັນ 8,3%; ການເກີນດຸນການຄ້າບັນລຸໄດ້ຫຼາຍກວ່າ 8 ຕື້ໂດລາສະຫະລັດ. ໝາບລວມດັ່ງກ່າວ ໄດ້ສ້າງເງື່ອນໄຂທີ່ເອື້ອອຳນວຍໃຫ້ພາກທຸລະກິດ ແລະ ລະບົບການເງິນສາມາດເຕີບໂຕໄດ້ຢ່າງມີສະຖຽນລະພາບ.

ໃນຖານະທະນາຄານຕ່າງປະເທດທີ່ມີທຶນ 100%, ຊາຄອມແບັງ ລາວ ຍັງຄົງຢືນຢັນບົດບາດເປັນສະຖາບັນການເງິນທີ່ໜ້າເຊື່ອຖື, ໃກ້ຊິດລູກຄ້າ ແລະ ເຂົ້າໃຈຕະຫຼາດທ້ອງຖິ່ນ. ພວກເຮົາຍັງສືບຕໍ່ເປັນຂົວຕໍ່ສຳຄັນໃນການຊຸກຍູ້ການຄ້າ ແລະ ການລົງທຶນລະຫວ່າງລາວ - ຫວຽດນາມ - ກຳປູເຈຍ (ສາມຊາດອິນດູຈີນ) ພ້ອມທັງສະໜອງບໍລິການການເງິນທີ່ທັນສະໄໝ, ວ່ອງໄວ ແລະ ປອດໄພ ເພື່ອຊ່ວຍປະຢັດຕົ້ນທຶນໃຫ້ແກ່ບັນດາວິສາຫະກິດ ກໍ່ຄືລູກຄ້າຂອງທະນາຄານ.

ປີ 2025 ໄດ້ສ້າງຂີດໝາຍດ້ວຍຜົນສຳເລັດຢ່າງຕັ້ງໜ້າຫຼາຍດ້ານ: ການລະດົມທຶນເຕີບໂຕຢ່າງໝັ້ນຄົງ, ສິນເຊື່ອຂະຫຍາຍຕົວຢ່າງມີຄຸນນະພາບ ໂດຍມຸ່ງເນັ້ນໄປຍັງຂະແໜງການຜະລິດ, ການຄ້າ, ນຳເຂົ້າ-ສົ່ງອອກ ແລະ ລູກຄ້າບຸກຄົນ; ບັນດາຕົວຊີ້ວັດຄວາມປອດໄພໄດ້ຮັບການປະຕິບັດຢ່າງເຄັ່ງຄັດ; ຄຸນນະພາບຊັບສິນ ແລະ ຂີດຄວາມສາມາດໃນການຄຸ້ມຄອງຄວາມສ່ຽງໄດ້ຮັບການປັບປຸງໃຫ້ດີຂຶ້ນເລື້ອຍໆ.

ໂດຍສະເພາະ, ການຫັນເປັນດິຈິຕອນ ຍັງຄົງເປັນໜຶ່ງໃນຍຸດທະສາດຫຼັກຂອງທະນາຄານ. ໃນປີ 2025, ຊາຄອມແບັງ ລາວ ໄດ້ພັດທະນາລະບົບໂຄງສ້າງດິຈິຕອນຢ່າງຕໍ່ເນື່ອງ, ດ້ວຍການອອກແບບທະນາຄານເທິງມືຖືໃໝ່ດ້ວຍແອັບໃໝ່ Sacombank E-Pay ທີ່ໃຫ້ປະສົບການທີ່ທັນສະໄໝ, ປອດໄພ ແລະ ສະດວກສະບາຍ, ຕອບສະໜອງທ່າອ່ຽງການຊຳລະແບບບໍ່ໃຊ້ເງິນສົດ. ນີ້ເປັນການຍົກລະດັບປະສົບການລູກຄ້າ ແລະ ເສີມສ້າງຂີດຄວາມສາມາດແຂ່ງຂັນໃນໄລຍະຍາວ. ຄຽງຄູ່ກັນນັ້ນ, ວຽກງານການປັບປຸງໂຄງສ້າງອົງກອນກໍໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບ ຕາມທິດທາງກະທັດຮັດ, ມີປະສິດທິພາບ ແລະ ຄ່ອງຕົວ, ປະກອບສ່ວນເຂົ້າ ໃນການບໍລິຫານງານໃຫ້ມີປະສິດຕິພາບ ແລະ ສ້າງພື້ນຖານໃຫ້ແກ່ໄລຍະການເຕີບໂຕໃໝ່.

ດ້ວຍແນວທາງການດຳເນີນງານທີ່ຍຶດລູກຄ້າເປັນສູນກາງ, ຊາຄອມແບັງ ລາວ ຍັງຄົງມຸ່ງໝັ້ນພັດທະນາຜະລິດຕະພັນ ແລະ ບໍລິການໃຫ້ຫຼາກຫຼາຍ ແລະ ທັນສະໄໝ, ຄຽງຄູ່ກັບການຍົກລະດັບຄຸນນະພາບການບໍລິການໃຫ້ດີຍິ່ງຂຶ້ນ. ພ້ອມກັນນັ້ນ, ທະນາຄານຍັງໄດ້ຜັກດັນບັນດາໂຄງການສຳຄັນທີ່ຕອບໂຈດຄວາມຕ້ອງການຕົວຈິງ, ເພື່ອຮ່ວມຄຽງຂ້າງວິສາຫະກິດ ແລະ ປະຊາຊົນ ໃນການກ້າວຂ້າມອຸປະສັກ, ຟື້ນຟູກິດຈະການ ແລະ ສ້າງການເຕີບໂຕຢ່າງຍືນຍົງ.

ກ້າວເຂົ້າສູ່ປີ 2026, ຊາຄອມແບັງ ລາວ ໄດ້ກຳນົດທິດທາງການເຄື່ອນໄຫວດ້ວຍຄຳຂວັນທີ່ວ່າ: “ພະລັງພາຍໃນເຂັ້ມແຂງ - ບຸກທະລຸເປັນຜູ້ນຳ - ຮ່ວມກັນພັດທະນາ”, ສືບຕໍ່ຍົກສູງປະສິດທິພາບການດຳເນີນງານ, ຊຸກຍູ້ການຫັນເປັນດິຈິຕອນ, ພັດທະນາຊັບພະຍາກອນມະນຸດທີ່ມີຄຸນນະພາບສູງ, ເພີ່ມທະວີການຄຸ້ມຄອງຄວາມສ່ຽງ ແລະ ຂະຫຍາຍຄຸນຄ່າການບໍລິການລູກຄ້າ ບົນພື້ນຖານທີ່ທັນສະໄໝ, ໂປ່ງໃສ ແລະ ຍືນຍົງ.

ຕາງໜ້າໃຫ້ສະພາຜູ້ບໍລິຫານ ຊາຄອມແບັງ ລາວ, ຂ້າພະເຈົ້າຂໍສະແດງຄວາມຂອບໃຈຢ່າງຈິງໃຈມາຍັງ ຄະນະຜູ້ບໍລິຫານ ຊາຄອມແບັງ ຫວຽດນາມ ທີ່ໄດ້ໃຫ້ທິດຊີ້ນຳໃນການເຄື່ອນໄຫວທີ່ມີປະສິດທິພາບຂອງ ຊາຄອມແບັງ ລາວ, ເຂົ້າໃຈຕໍ່ສະພາບການຕະຫຼາດ ແລະ ສະໜັບສະໜູນທຸກການເຄື່ອນໄຫວຂອງພວກເຮົາ. ຂ້າພະເຈົ້າ ຍັງຂໍສະແດງຄວາມຂອບໃຈຢ່າງສູງມາຍັງ ຄະນະຜູ້ບໍລິຫານ ແລະ ພະນັກງານ-ລັດຖະກອນທຸກທ່ານ ທີ່ໄດ້ທຸ່ມເທເຫື່ອແຮງ, ສະຕິປັນຍາ ແລະ ຄວາມສາມາດ ເພື່ອສ້າງຜົນສຳເລັດອັນພົ້ນເດັ່ນຂອງ ຊາຄອມແບັງ ລາວ ໃນມື້ນີ້ ແລະ ຈະສືບຕໍ່ຂຽນໜ້າປະຫວັດສາດແຫ່ງຄວາມສຳເລັດໃໝ່ໃນຕໍ່ໜ້າ.

ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຢ່າງຈິງໃຈມາຍັງ ທ່ານຜູ້ຖືຫຸ້ນ, ຄູ່ຮ່ວມທຸລະກິດ ແລະ ລູກຄ້າ ທີ່ຍາມໃດກໍໃຫ້ຄວາມເຊື່ອໝັ້ນ, ເລືອກ ແລະ ຮ່ວມເດີນທາງໄປກັບ ຊາຄອມແບັງ ລາວ ຕະຫຼອດໄລຍະການພັດທະນາທີ່ຜ່ານມາ. ຄວາມໄວ້ເນື້ອເຊື່ອໃຈ ແລະ ການຮ່ວມມືອັນແໜ້ນແຟ້ນຂອງພວກທ່ານ ແມ່ນພື້ນຖານອັນສຳຄັນເພື່ອໃຫ້ ຊາຄອມແບັງ ລາວ ເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ, ຍົກສູງມູນຄ່າຂອງວິສາຫະກິດ ແລະ ຢືນຢັນບົດບາດໃນການເປັນຂົວຕໍ່ຊຸກຍູ້ການຄ້າລະຫວ່າງສອງຊາດ ລາວ-ຫວຽດນາມ. ໃນເສັ້ນທາງສາຍໃໝ່, ຊາຄອມແບັງ ລາວ ຂໍໃຫ້ຄຳໝັ້ນສັນຍາວ່າຈະສືບຕໍ່ຮັກສາຄວາມເຊື່ອໝັ້ນນັ້ນ ດ້ວຍການດຳເນີນງານທີ່ເປັນຮູບປະທຳ, ໂປ່ງໃສ ແລະ ມີປະສິດທິພາບ; ຮ່ວມກັບພວກທ່ານສ້າງຄຸນຄ່າທີ່ຍືນຍົງ, ກ້າວໄປສູ່ອະນາຄົດທີ່ປອດໄພ, ຮັ່ງມີ ແລະ ຍືນຍົງ.
ຂໍອວຍພອນໃຫ້ທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມສຸກ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານ.
ດ້ວຍຄວາມເຄົາລົບຢ່າງສູງ,

**ຕາງໜ້າ ສະພາບໍລິຫານ**
**ປະທານ**

**ທ່ານ ນາງ. ຫວໍ ທິ ເຍືອກ ທຸຍ**
(VÕ THỊ NHƯỢC THỦY)

## ວິໄສທັດ

- ເປັນຜູ້ນຳ ທະນາຄານທຸລະກິດ ເພື່ອລູກຄ້າລາຍຍ່ອຍ, ທີ່ມີຄວາມທັນສະໄໝທາງດ້ານການໃຫ້ບໍລິການ ແລະ ຄົບວົງຈອນຢູ່ລະດັບຕົ້ນໆ ຂອງ ສປປ ລາວ.

## ພາລະກິດ

- ສະໜອງຜະລິດຕະພັນທາງດ້ານການເງິນທີ່ຄົບວົງຈອນ, ທັນສະໄໝ ແລະ ໃຫ້ເກີດຄຸນປະໂຫຍດສູງສຸດແກ່ລູກຄ້າ.
ສະໜອງຄຸນຄ່າສູງສຸດແກ່ຄູ່ຮ່ວມທຸລະກິດ, ຜູ້ລົງທຶນ ແລະ ຜູ້ຖືຮຸ້ນ.
ນຳຄວາມກ້າວໜ້າ ແລະ ຄວາມໝັ້ນຄົງທີ່ດີທີ່ສຸດ ໃຫ້ແກ່ ພະນັກງານ.
ການພັດທະນາຄຽງຄູ່ໄປພ້ອມຄວາມຮັບຜິດຊອບຕໍ່ສັງຄົມ.

## ຄຸນຄ່າແກ່ນສານ

- ເປັນຜູ້ບຸກເບີກ ແລະ ຍຶດໝັ້ນຕໍ່ແນວທາງ ເພື່ອຜ່ານພົ້ນສິ່ງທີ່ທ້າທາຍ ແລະ ກ້າວໄປສູ່ຜົນສຳເລັດ.
- ພ້ອມທີ່ຈະປັບປຸງ ແລະ ປ່ຽນແປງເພື່ອການພັດທະນາແບບຍືນຍົງ.
- ສ້າງຄວາມແຕກຕ່າງທີ່ໂດດເດັ່ນ ທາງດ້ານຄວາມຄິດສ້າງສັນໃນການດຳເນີນທຸລະກິດ ແລະ ການຄຸ້ມຄອງບໍລິຫານແບບໃໝ່ທີ່ມີປະສິດຕິພາບ.
- ຮັບປະກັນຄຸນນະພາບທາງດ້ານການໃຫ້ບໍລິການ ແລະ ການສ້າງສາຍສຳພັນກັບ ຄູ່ຮ່ວມທຸລະກິດແມ່ນຫຼັກການຂອງພະນັກງານທຸກຄົນ ທີ່ຕ້ອງປະຕິບັດ.
- ມີຄວາມຮັບຜິດຊອບຕໍ່ຊຸມຊົນ ແລະ ສັງຄົມ.







- **ຊື່ເຕັມຂອງທະນາຄານ:** ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (SAIGON THUONG TIN BANK LAO SOLE CO., LTD)
- **ຊື່ຫຍໍ້ຂອງທະນາຄານ:** ຊາຄອມແບັງ ລາວ (SACOMBANK LAO)
- **ທີ່ຕັ້ງສຳນັກງານໃຫຍ່:** 044 ຖະໜົນ ແຫ່ງບຸນ, ບ້ານ ຫາຍໂສກ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.
- **ວັນສ້າງຕັ້ງ:** 12/12/2008 - 12/12/2025 (ຄົບຮອບ 17 ປີ)
- **Email:** contact_sl@sacombank.com
- **Website:** www.sacombank.com.la
- **Facebook page:** Sacombank Lao
- **Hotline:** **1686**



ທະນາຄານ ຊາຄອມແບັງ ແມ່ນທະນາຄານທຸລະກິດຊັ້ນນຳອັນດັບຕົ້ນໆ ຂອງຫວຽດນາມ ມີຕາໜ່າງເຄືອຂ່າຍຂະຫຍາຍຢ່າງ ຄອບຄຸມໃນຂອບເຂດສາມຊາດອິນດູຈີນຄື: ສາທາລະນະ ສັງຄົມນິຍົມ ຫວຽດນາມ (ສສ ຫວຽດນາມ), ຣາຊະອານາຈັກ ກຳປູເຈຍ (ປະເທດ ກຳປູເຈຍ) ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ (ສປປ ລາວ) ໂດຍ ມີ 540 ຈຸດ ໃຫ້ບໍລິການກະຈາຍໄປທົ່ວພາກພື້ນ.

ເລີ່ມຕົ້ນເຄື່ອນໄຫວທຸລະກິດດ້ວຍຮູບແບບສາຂາ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 12/12/2008 ເຊິ່ງເປັນຈຸດເລີ່ມຕົ້ນຂອງການເຂົ້າສູ່ຕະຫຼາດຂະແໜງການທະນາຄານຢູ່ຕ່າງປະເທດ ແຫ່ງທຳອິດ ຂອງຊາຄອມແບັງ.
ເຖິງແມ່ນວ່າຈະພົບກັບອຸປະສັກ ແລະ ສິ່ງທ້າທາຍຫຼາຍດ້ານ ແຕ່ທະນາຄານກໍ່ຍັງສືບຕໍ່ໄດ້ຮັບໂອກາດ ແລະ ທ່າແຮງສະໜັບສະໜູນຈາກ ບັນດາລູກຄ້າ, ຄູ່ຮ່ວມທຸລະກິດ ແລະ ບັນດາອົງການຈັດຕັ້ງພັກ - ລັດ ແລະ ອົງການຈັດຕັ້ງສາກົນສະເໝີມາ...

ຫຼັງຈາກເຄື່ອນໄຫວພາຍໃຕ້ຮູບແບບສາຂາຕ່າງປະເທດໄດ້ 7 ປີ, ໃນວັນທີ 01/08/2015 ສະຖານະພາບທາງກົດໝາຍຂອງທະນາຄານຖືກປ່ຽນຮູບແບບເປັນ ບໍລິສັດຈຳກັດ ທີ່ມີຊື່ວ່າ ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດ ເຊິ່ງເປັນເຈົ້າຂອງໂດຍ ຊາຄອມແບັງ ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານເລກທີ 15 ອອກໃຫ້ໂດຍ ທະນາຄານແຫ່ງ ສປປ ລາວ ຫຼື ທຫລ, ລົງວັນທີ 9 ມິຖຸນາ 2014. ເຊິ່ງເປັນການສ້າງເງື່ອນໄຂໃຫ້ແກ່ທະນາຄານໃນການພັດທະນາບັນດາຜະລິດຕະພັນ - ການບໍລິການທີ່ຫຼາກຫຼາຍ ແລະ ທັນສະໄໝ, ສາມາດຕອບໂຈດຄວາມຕ້ອງການຂອງລູກຄ້າໂດຍຢູ່ພາຍໃຕ້ການນຳພາຂອງ ທະນາຄານແມ່ (ຊາຄອມແບັງ ຫວຽດນາມ).

# ເຫດການທີ່ພົ້ນເດັ່ນ ຂອງປີ 2025

## ຊາຄອມແບັງ ລາວ ຈັດກອງປະຊຸມສະຫຼຸບວຽກງານປະຈຳປີ 2025 ແລະ ວາງແຜນດຳເນີນທຸລະກິດປີ 2026 ຢ່າງສຳເລັດຜົນ




ໃນວັນທີ 15 ມັງກອນ 2026, ທະນາຄານ ຊາຄອມແບັງ ລາວ ໄດ້ຈັດກອງປະຊຸມສະຫຼຸບຜົນການເຄື່ອນໄຫວທຸລະກິດປະຈຳປີ 2025 ແລະ ວາງແຜນດຳເນີນທຸລະກິດປະຈຳປີ 2026 ຢ່າງເປັນທາງການ ທີ່ສຳນັກງານໃຫຍ່ຊາຄອມແບັງລາວ ແລະ ຈັດສະຫຼຸບງານລ້ຽງທີ່ໂຮງແຮມ Amari ນະຄອນຫຼວງວຽງຈັນ.

ກອງປະຊຸມຄັ້ງນີ້ ໄດ້ຮັບກຽດເຂົ້າຮ່ວມໂດຍ ຄະນະຜູ້ບໍລິຫານລະດັບສູງ ຈາກທະນາຄານແມ່ ຊາຄອມແບັງ ຫວຽດນາມ, ສະພາບໍລິຫານ, ຄະນະອຳນວຍການໃຫຍ່, ພ້ອມດ້ວຍພະນັກງານທັງໝົດຂອງ ຊາຄອມແບັງ ລາວ.










ກອງປະຊຸມຄັ້ງນີ້, ຄະນະຜູ້ບໍລິຫານລະດັບສູງຈາກ ຊາຄອມແບັງ ຫວຽດນາມ ໄດ້ໃຫ້ຄຳຊີ້ນຳ ແລະ ກຳນົດແນວທາງຍຸດທະສາດການດຳເນີນງານປີ 2026 ໂດຍມຸ່ງເນັ້ນການສ້າງພື້ນຖານທີ່ໝັ້ນຄົງ, ຍົກສູງປະສິດທິພາບການດຳເນີນງານ, ຖືລູກຄ້າເປັນສູນກາງ ແລະ ສືບຕໍ່ບົດບາດການເປັນຄູ່ຮ່ວມຍຸດທະສາດໄລຍະຍາວໃນ ສປປ ລາວ.






ສຳລັບທິດທາງໃນປີ 2026, ຊາຄອມແບັງ ລາວ ກຳນົດເປົ້າໝາຍສູ້ຊົນໃຫ້ບັນລຸ ແລະ ເກີນຄາດໝາຍຕົວເລກທຸລະກິດ ບົນພື້ນຖານ "ປອດໄພ – ຍືນຍົງ – ມີປະສິດທິຜົນ", ເພື່ອແນ່ໃສ່ວິໄສທັດຂອງທະນາຄານ ຄືການເປັນ "ທະນາຄານຫວຽດນາມ ທີ່ມີການດຳເນີນງານ ທີ່ມີຄວາມປອດໄພ, ມີປະສິດຕິຜົນ ແລະ ມີຄວາມຍືນຍົງ".

## ທະນາຄານ ຊາຄອມແບັງ ລາວ ມອບລົດໄຟຟ້າ Volkswagen ID.4 ໃຫ້ຜູ້ໂຊກດີຈາກໂຄງການ "ຝາກເງິນລຸ້ນຮັບລົດໃຫຍ່ໄປກັບ ຊາຄອມແບັງ ລາວ"






ໃນວັນທີ 23 ທັນວາ 2025, ທະນາຄານ ຊາຄອມແບັງ ລາວ ໄດ້ຈັດພິທີມອບລົດໄຟຟ້າ Volkswagen ID.4 ຢ່າງເປັນທາງການໃຫ້ແກ່ ທ່ານນາງ ບຸນແກ້ວ ສຸພານິດ ຜູ້ໂຊກດີຈາກການຈັບສະຫຼາກໃນວັນທີ 16 ທັນວາ ຜ່ານມາ ໂດຍມີຜູ້ຕາງໜ້າຈາກທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມເປັນສັກຂີພະຍານ.

ທ່ານນາງ ບຸນແກ້ວ ໄດ້ສະແດງຄວາມດີໃຈວ່າ: "ໃນຖານະລູກຄ້າປະຈຳ ທີ່ເຊື່ອ ໝັ້ນໃນການບໍລິການ ຂອງທະນາຄານຕະຫຼອດມາ, ນີ້ຖືເປັນລາງວັນທີ່ໃຫຍ່ທີ່ສຸດໃນຊີວິດ. ຂໍຂອບໃຈທະນາຄານທີ່ຈັດກິດຈະກຳດີໆ ເພື່ອໃຫ້ລູກຄ້າທຸກຄົນໄດ້ມີສິດລຸ້ນຮັບລາງວັນຮ່ວມກັນ."

# ເຫດການທີ່ພົ້ນເດັ່ນຂອງປີ 2025 (ຕໍ່)

## ຊາຄອມແບັງ ລາວ ຊ່ວຍແກ້ໄຂບັນຫາໃນການເຂົ້າເຖິງແຫຼ່ງທຶນໃຫ້ SME ຢູ່ ສປປ ລາວ

ວັນທີ 19/9/2025, ຊາຄອມແບັງ ລາວ ຮ່ວມກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງຈຳປາສັກ, ໄດ້ຈັດງານສຳມະນາພິເສດໃນຫົວຂໍ້ "ສ້າງໂອກາດເຂົ້າເຖິງແຫຼ່ງທຶນ ໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ Unlock SME finance for the future". ທີ່ໄດ້ມາຊ່ວຍໃຫ້ຫົວໜ່ວຍ SME ສາມາດເຂົ້າເຖິງສິນເຊື່ອດອກເບ້ຍຕ່ຳ 3% ຫາ 9% ໄດ້ງ່າຍຂຶ້ນ ໂດຍການແນະນຳຂັ້ນຕອນການປະກອບເອກະສານຢ່າງລະອຽດ ພ້ອມທັງແລກປ່ຽນປະສົບການຕົວຈິງຈາກລູກຄ້າທີ່ໄດ້ຮັບທຶນຈາກລັດຖະບານ. ທະນາຄານ ຊາຄອມແບັງ ລາວ ຍັງໄດ້ເປີດເວທີແກ້ໄຂບັນຫາການກູ້ຢືມຢ່າງກົງໄປກົງມາ ເພື່ອຢືນຢັນບົດບາດການເປັນຂົວຕໍ່ດ້ານທຶນຮອນຈາກພາກລັດ ແລະ ໃຫ້ຄຳໝັ້ນສັນຍາທີ່ຈະຮ່ວມພັດທະນາເສດຖະກິດທ້ອງຖິ່ນໃຫ້ເຕີບໂຕຢ່າງຍືນຍົງ




## ສະເຫຼີມສະຫຼອງຄົບຮອບ 17 ປີ ແຫ່ງການເຕີບໃຫຍ່ຂອງ ຊາຄອມແບັງ ລາວ (12/12/2008 – 12/12/2025)

ຊາຄອມແບັງ ລາວ ຈັດງານສະເຫຼີມສະຫຼອງຄົບຮອບ 17 ປີ (12/12/2008 – 12/12/2025) ຢ່າງຍິ່ງໃຫຍ່ ແລະ ອົບອຸ່ນ. ກິດຈະກຳເລີ່ມດ້ວຍ ງານກິລາສ້າງສັນສາມັກຄີ ເພື່ອເສີມສ້າງສຸຂະພາບ ແລະ ຄວາມເປັນປຶກແຜ່ນ, ຕາມດ້ວຍງານລ້ຽງພົບປະສັງສັນ ແລະ ພິທີມອບຂອງຂວັນວັນເກີດໃຫ້ພະນັກງານໃນໄຕມາດທີ 4.

ຕະຫຼອດ 17 ປີ ແຫ່ງການພັດທະນາ, ພວກເຮົາຂໍຂອບໃຈລູກຄ້າທີ່ໄວ້ວາງໃຈ ແລະ ພະນັກງານທຸກຄົນທີ່ທຸ່ມເທແຮງກາຍແຮງໃຈ. ພາບຄວາມຊົງຈຳເຫຼົ່ານີ້ຈະເປັນແຮງຊຸກຍູ້ໃຫ້ຊາວ Sacombanker ທຸກຄົນພ້ອມກັນສ້າງສັນ ແລະ ກ້າວໄປສູ່ຜົນສຳເລັດໃໝ່ທີ່ຍິ່ງໃຫຍ່ກວ່າເກົ່າໃນອະນາຄົດ.




## ຊາຄອມແບັງ ລາວ ສ້າງຝັນໃຫ້ນ້ອງນັກຮຽນ 236 ຄົນໃນການເປີດສົກຮຽນໃໝ່ 2025-2026!

ໃນໂອກາເປີດສົກຮຽນໃໝ່, ຊາຄອມແບັງ ລາວ ໄດ້ມອບຂອງຂັວນ 236 ຊຸດ ອຸປະກອນການຮຽນ ແລະ ທຶນການສຶກສາ 11 ທຶນ ໃຫ້ແກ່ນັກຮຽນຂາດເຂີນທີ່ໂຮງຮຽນປະຖົມສົມບູນບ້ານໜອງພົງ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ. ຂອງຂວັນເຫຼົ່ານີ້ເປັນການຊ່ວຍເຫຼືອທີ່ມີຄວາມໝາຍ ແລະ ເພື່ອເປັນກຳລັງໃຈໃຫ້ນ້ອງໆໄດ້ກ້າວເຂົ້າສູ່ສົກຮຽນໃໝ່ທີ່ເຕັມໄປດ້ວຍຄວາມກະຕືລືລົ້ນໃນການຮຽນຮູ້ ແລະ ເພື່ອການສ້າງອະນາຄົດທີ່ສົດໃສ.




## ຊາຄອມແບັງ ລາວ ໄດ້ຈັດຕັ້ງໂຄງການບໍລິຈາກ "ອົບອຸ່ນລະດູບານໃໝ່ຄັ້ງທີ 22"

ເພື່ອຕ້ອນຮັບປີໃໝ່ 2025, ຊາຄອມແບັງ ລາວ ໄດ້ສືບຕໍ່ກິດຈະກຳເພື່ອສັງຄົມໃນໂຄງການ "ອົບອຸ່ນລະດູບານໃໝ່ ຄັ້ງທີ 22" ໂດຍການມອບເຄື່ອງອຸປະໂພກ-ບໍລິໂພກທີ່ຈຳເປັນ ໃຫ້ແກ່ນ້ອງໆນັກຮຽນຜູ້ດ້ອຍໂອກາດ ແລະ ພິການທາງດ້ານຮ່າງກາຍ ຈຳນວນ 103 ຄົນ ທີ່ໂຮງຮຽນສຶກສາພິເສດ ບ້ານໜອງໜ້ຽວ, ນະຄອນຫຼວງວຽງຈັນ.

ກິດຈະກຳນີ້ແມ່ນປະເພນີທີ່ຈັດຂຶ້ນເປັນປະຈຳທຸກປີໃນ 3 ຊາດອິນດູຈີນ (ລາວ, ຫວຽດນາມ, ກຳປູເຈຍ) ເພື່ອແບ່ງປັນຄວາມສຸກ ແລະ ຮອຍຍິ້ມໃຫ້ແກ່ຜູ້ທີ່ຂາດເຂີນໃນສັງຄົມ. ຊາຄອມແບັງ ລາວ ພ້ອມດ້ວຍພະນັກງານທຸກຄົນ ຂໍເປັນສ່ວນໜຶ່ງໃນການສ້າງກຳລັງໃຈ ແລະ ສົ່ງຕໍ່ຄວາມປາດຖະໜາດີ ເພື່ອການເລີ່ມຕົ້ນປີໃໝ່ທີ່ສົດໃສ ແລະ ເຕັມໄປດ້ວຍຄວາມອົບອຸ່ນ.




## ສ້າງສິ່ງແວດລ້ອມໃຫ້ຍືນຍົງ ສືບສານການຄຸ້ມຄອງປ່າໄມ້ ເພື່ອອະນາຄົດສີຂຽວຂອງຊາດລາວ

ເນື່ອງໃນວັນປູກຕົ້ນໄມ້ແຫ່ງຊາດ 2025, ທະນາຄານ ຊາຄອມແບັງ ລາວ ໄດ້ຮ່ວມກັບ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຈັດກິດຈະກຳປູກຕົ້ນໄມ້ເພື່ອສ້າງພື້ນທີ່ສີຂຽວ ແລະ ຟື້ນຟູລະບົບນິເວດ, ເຊິ່ງເປັນການປະກອບສ່ວນເຂົ້າໃນເປົ້າໝາຍຂອງພາກລັດ ໃນການຫຼຸດຜ່ອນມົນລະພິດ ແລະ ປູກຈິດສຳນຶກການປົກປັກຮັກສາສິ່ງແວດລ້ອມໃຫ້ຍືນຍົງ ພາຍໃຕ້ຄຳຂວັນ 'ປູກຕົ້ນໄມ້ໃນວັນນີ້ ເພື່ອລູກຫຼານໃນວັນໜ້າ



## ຊາຄອມແບັງ ລາວ ຈັດກິດຈະກຳສະເຫຼີມສະຫຼອງ ສົ່ງທ້າຍປີເກົ່າ ຕ້ອນຮັບປີໃໝ່ລາວ

ຊາຄອມແບັງ ລາວ ຈັດງານສະເຫຼີມສະຫຼອງບຸນປີໃໝ່ລາວ ພສ 2568 ຢ່າງອົບອຸ່ນ ເພື່ອສືບທອດປະເພນີອັນດີງາມ ຜ່ານພິທີບາສີສູ່ຂວັນ, ຫົດສົງພະ ແລະ ມອບຂອງລາງວັນໃຫ້ພະນັກງານ. ກິດຈະກຳຄັ້ງນີ້ບໍ່ພຽງແຕ່ເປັນການສ້າງສິລິມຸງຄຸນໃນການເລີ່ມຕົ້ນປີໃໝ່, ແຕ່ຍັງເປັນການຮັດແໜ້ນຄວາມສາມັກຄີພາຍໃນອົງກອນ ເພື່ອພ້ອມກັນກ້າວໄປສູ່ຄວາມສຳເລັດຮ່ວມກັນ.




## ງານມ່ວນຊື່ນວັນໄຫວ້ພະຈັນໃຫ້ກັບພະນັກງານ ແລະ ຄອບຄົວຂອງພະນັກງານ & ວັນເກີດປະຈຳໄຕມາດ III

ຊາຄອມແບັງ ລາວ ໄດ້ຈັດງານສະເຫຼີມສະຫຼອງວັນໄຫວ້ພະຈັນ ເຊິ່ງເປັນບຸນປະເພນີອັນຈົບງາມຂອງຊາວຫວຽດນາມ ເພື່ອສ້າງຄວາມເບີກບານມ່ວນຊື່ນໃຫ້ແກ່ລູກຫຼານພະນັກງານ ແລະ ຮັດແໜ້ນຄວາມຜູກພັນໃນຄອບຄົວໃຫຍ່ຂອງພວກເຮົາ ພ້ອມທັງຈັດພິທີອວຍພອນວັນເກີດ ໃຫ້ພະນັກງານປະຈຳໄຕມາດ III/2025 ຢ່າງອົບອຸ່ນ.




## ທ່ອງທ່ຽວປະຈຳປີ 2025 ຂອງ ຊາຄອມແບັງ ລາວ ທີ່ Namkat Yorla pa ແຂວງອຸດົມໄຊ

ລະຫວ່າງວັນທີ 19–21 ກໍລະກົດ 2025, ຄອບຄົວ ຊາຄອມແບັງ ລາວ ໄດ້ຮ່ວມສຳຜັດທຳມະຊາດທີ່ສວຍງາມຂອງ ນ້ຳກັດ ຍໍລະປາ ເພື່ອພັກຜ່ອນ ແລະ ຮຽນຮູ້ນ້ຳໃຈໄມຕີຈິດຂອງຄົນທ້ອງຖິ່ນ. ນອກຈາກການທ່ອງທ່ຽວແລ້ວ, ທະນາຄານຍັງໄດ້ຈັດກິດຈະກຳ Team Building ເພື່ອຮັດແໜ້ນຄວາມສາມັກຄີ ແລະ ງານ Gala Dinner ທີ່ເຕັມໄປດ້ວຍການແລກປ່ຽນສິລະປະວັດທະນະທຳລາວ-ຫວຽດນາມ ຢ່າງອົບອຸ່ນ.



## ປະຫວັດຄວາມເປັນມາ ແລະ ການຂະຫຍາຍຕົວຂອງທະນາຄານ




**12/12/2008**
ເປີດບໍລິການມື້ທຳອິດໃນຮູບແບບສາຂາ ທະນາຄານ ທຸລະກິດຕ່າງປະເທດ.

**11/11/2011**
ຊາຄອມແບັງ ລາວ ໄດ້ຂະຫຍາຍເຄືອຂ່າຍທຸລະກິດ ໂດຍການເປີດ ໜ່ວຍບໍລິການຕະຫຼາດເຊົ້າ.

**15/08/2013**
ໄດ້ເປີດໃຊ້ຕຶກອາຄານສຳນັກງານໃຫຍ່ ຫຼັງໃໝ່ທີ່ໃຫຍ່ ແລະ ທັນສະໄໝກວ່າເກົ່າ, ຕັ້ງຢູ່ຖະໜົນ ແຕ່ງບຸນ, ບ້ານ ຫາຍໂສກ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.

**15/08/2013**
ຫັນປ່ຽນເປັນ ທະນາຄານ ທຸລະກິດ ລົງທຶນຕ່າງປະເທດ 100%.

**16/05/2016**
ຫັນປ່ຽນໜ່ວຍບໍລິການທັດສະດີເປັນສາຂາ ນະຄອນຫຼວງວຽງຈັນ, ທີ່ຕັ້ງອາຄານເລກທີ 175/02 ຖະໜົນ ສາຍລົມ, ບ້ານທັດສະດີ, ເມືອງ ຈັນທະບູລີ, ນະຄອນ ຫຼວງວຽງຈັນ.

**10/06/2016**
ເປີດສາຂາ ຈຳປາສັກ, ທີ່ຕັ້ງອາຄານເລກທີ 11-12-13 ຖະໜົນສາລາ ຂຽວ - ດົງຈອງ ບ້ານ ໂພນກຸງ, ນະຄອນປາກເຊ, ແຂວງ ຈຳປາສັກ.

**26/04/2017**
ຫັນປ່ຽນໜ່ວຍບໍລິການຕະຫຼາດເຊົ້າເປັນ ສາຂາ ທາດຫຼວງ, ຕັ້ງຢູ່ທີ່ຖະໜົນກຳແພງເມືອງ, ບ້ານ ທາດ ຫຼວງໃຕ້, ເມືອງ ໄຊເສດຖາ, ນະ ຄອນຫຼວງວຽງຈັນ.

**29/09/2017**
ເປີດສາຂາສະຫວັນນະເຂດ ທີ່ຕັ້ງອາຄານ ເລກທີ 203, ຖະໜົນ ສີສະຫວ່າງວົງ, ບ້ານ ນາເລົ່າ, ນະຄອນໄກສອນ ພົມວິ ຫານ, ແຂວງ ສະຫວັນນະເຂດ.

**25/06/2018**
ຍ້າຍທີ່ຕັ້ງສາຂາ ນະຄອນຫຼວງວຽງຈັນ ໄປທີ່ຖະໜົນລ້ານຊ້າງ, ບ້ານທັດສະດີໃຕ້, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.

**15/02/2019**
ເປີດສາຂາ ລ້ານຊ້າງ ທີ່ຕັ້ງອາຄານ ເລກທີ 044, ຖະໜົນ ແຕ່ງບຸນ, ບ້ານ ຫາຍໂສກ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.

**10/01/2020**
ແອັບ 365P@Y ແມ່ນ ທະນາຄານ ເທິງ ມືຖື ຂອງ ຊາຄອມແບັງ ລາວ ໄດ້ເປີດນຳໃຊ້ທົ່ວລະບົບເລີ່ມແຕ່ເດືອນ 10/01/2020.

**02/03/2020**
ຊາຄອມແບັງ ລາວໄດ້ເປີດ ໃຫ້ບໍລິການລະບົບເຄືອຂ່າຍ Lapnet ຢ່າງເປັນທາງການ ເລີ່ມແຕ່ ວັນທີ 02/03/2020.

**11/11/2020**
ຊາຄອມແບັງ ລາວ ໄດ້ຮັບ ລາງວັນທະນາຄານທີ່ ໃຫ້ບໍລິການ SMEs ທີ່ດີທີ່ສຸດໃນສປປ ລາວ ປະຈຳປີ 2020 ຈາກວາລະສານ 'Global Banking and Finance Review' ຂອງປະເທດອັງກິດ.

**12/12/2021**
ທະນາຄານສືບຕໍ່ໄດ້ຮັບການຄັດເລືອກໃຫ້ ເປັນ ທະນາຄານ SMEs ທີ່ດີທີ່ສຸດ ໃນ ສປປ ລາວ ຈາກວາລະສານ 'Global Banking and Finance Review' ຂອງປະເທດອັງກິດ ປະຈຳປີ 2021.

**18/03/2022**
ຊາຄອມແບັງ ລາວ ເປັນໜຶ່ງໃນ 05 ສະຖາບັນການເງິນ ທີ່ໄດ້ຮັບການຍ້ອງຍໍຈາກກະຊວງອຸດສາຫະກຳ ແລະ ການຄ້າຍົກໃຫ້ເປັນ "ທະນາຄານ ທີ່ມີຜົນງານດີເດັ່ນໃນການສະໜອງສິນເຊື່ອບ້ວງເງິນຂອງກອງທຶນສົ່ງເສີມວິສາຫະກິດຂະໜາດ ນ້ອຍ ແລະ ກາງ (MSME) ປະຈຳປີ 2022".

**2023**
ເປັນອົງກອນນຳໜ້າດີເດັ່ນໃນການດຳເນີນທຸລະກິດທະນາຄານດິຈິຕອນປະຈຳປີ 2023 ຈາກອົງກອນບັດ visa ສາກົນ.

**2024**
ຊາຄອມແບັງ ລາວ ໄດ້ຮັບການຍ້ອງຍໍຈາກ ກະຊວງອຸດສາຫະກຳ ແລະ ການຄ້າຍົກໃຫ້ເປັນ "ທະນາຄານ ທີ່ມີຜົນງານດີເດັ່ນໃນການ ສະໜອງສິນເຊື່ອບ້ວງເງິນ ຂອງກອງທຶນສົ່ງ ເສີມວິສາຫະກິດຂະໜາດ ນ້ອຍ ແລະ ກາງ.

**2025**
Sacombank Lao ປ່ຽນໂສມແອັບໃໝ່! ຈາກ SACOMBANK 365P@y ສູ່ SACOMABNK E-Pay: ທັນສະໄໝກວ່າ, ງ່າຍກວ່າ, ວ່ອງໄວ ແລະ ປອດໄພກວ່າເກົ່າ.
ປັບໂຄງສ້າງໃໝ່ ມຸ່ງສູ່ Digital Banking ເຕັມຮູບແບບເພື່ອ ເພີ່ມປະສິດທິພາບການບໍລິການ ດ້ວຍການລວມສາຂາ:
- ສາຂາຈຳປາສັກ (ລວມ ສຂ.ສະຫວັນນະເຂດ) | 23/06/2025
- ສາຂາລ້ານຊ້າງ (ລວມ ສຂ.ນະຄອນຫຼວງ-ທາດຫຼວງ) | 07/02/2025

# ໂຄ່ງຮ່າງການຈັດຕັ້ງ



## ຄະນະສະພາບໍລິຫານ



**ທ່ານ ນາງ Vo Thi Nhuoc Thuy**
ປະທານສະພາບໍລິຫານ

ປະສົບການໃນວຽກງານການເງິນ - ການທະນາຄານ ຫຼາຍກວ່າ 30 ປີ



**ທ່ານ Tran Ngoc Cuong**
ຮອງປະທານສະພາບໍລິຫານ

ປະສົບການໃນວຽກງານການເງິນ - ການທະນາຄານ ຫຼາຍກວ່າ 36 ປີ



**ທ່ານ Phan Thanh Tuan**
ສະມາຊິກສະພາບໍລິຫານ

ປະສົບການໃນວຽກງານການເງິນ - ການທະນາຄານ ຫຼາຍກວ່າ 20 ປີ



**ທ່ານ ນາງ ບົວທອງ ສີສະຫວັດ**
ສະມາຊິກສະພາບໍລິຫານ

ປະສົບການໃນວຽກງານການເງິນ - ການທະນາຄານ ຫຼາຍກວ່າ 17 ປີ



**ທ່ານ ບຸນຍູ້ ສີສານ**
ສະມາຊິກສະພາບໍລິຫານ ພາຍນອກ

ປະສົບການໃນວຽກງານການເງິນ - ການທະນາຄານ ຫຼາຍກວ່າ 11 ປີ





## ທ່ານ Phan Thanh Tuan
## ຜູ້ອຳນວຍການໃຫຍ່

ປະສົບການໃນວຽກງານການເງິນ - ການທະນາຄານ
ຫຼາຍກວ່າ 20 ປີ

**ທ່ານ ນາງ ບົວທອງ ສີສະຫວັດ**
ຮອງຜູ້ອຳນວຍການໃຫຍ່

ປະສົບການໃນວຽກງານການເງິນ - ການທະນາຄານ
ຫຼາຍກວ່າ 17 ປີ



**ທ່ານ Tran Dinh Nam**
ຮອງຜູ້ອຳນວຍການໃຫຍ່

ປະສົບການໃນວຽກງານການເງິນ - ການທະນາຄານ
ຫຼາຍກວ່າ 13 ປີ



**ທ່ານ ນາງ ອຸໄລພອນ ໂສເງິນ**
ຮອງຜູ້ອຳນວຍການໃຫຍ່

ປະສົບການໃນວຽກງານການເງິນ - ການທະນາຄານ
ຫຼາຍກວ່າ 20 ປີ



## ຂໍ້ມູນທົ່ວໄປກ່ຽວກັບທະນາຄານ

ສຳລັບປີການບັນຊີສິ້ນສຸດ 31 ທັນວາ 2025

### ທະນາຄານ

ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ

### ໃບອະນຸຍາດດຳເນີນກິດຈະການທະນາຄານເລກທີ

3474/ຈທວ, ລົງວັນທີ 10 ພະຈິກ 2023

### ຄະນະສະພາບໍລິຫານ

| ຊື່ | ຕຳແໜ່ງ |
|---|---|
| ທ່ານ Vo Thi Nhuoc Thuy | ປະທານ |
| ທ່ານ Tran Ngoc Cuong | ຮອງປະທານ |
| ທ່ານ Phan Thanh Tuan | ສະມາຊິກ |
| ທ່ານ ນາງ ບົວທອງ ສີສະຫວັດ | ສະມາຊິກ |
| ທ່ານ ບຸນຍູ້ ສີສານ | ສະມາຊິກ ພາຍນອກ |

### ຄະນະອຳນວຍການໃຫຍ່

| ຊື່ | ຕຳແໜ່ງ |
|---|---|
| ທ່ານ Phan Thanh Tuan | ຜູ້ອຳນວຍການໃຫຍ່ |
| ທ່ານ ນາງ ອຸໄລພອນ ໂສເງິນ | ຮອງຜູ້ອຳນວຍການໃຫຍ່ |
| ທ່ານ Tran Dinh Nam | ຮອງຜູ້ອຳນວຍການໃຫຍ່ |
| ທ່ານ ນາງ ບົວທອງ ສີສະຫວັດ | ຮອງຜູ້ອຳນວຍການໃຫຍ່ |

### ສຳນັກງານ

044 ຖະໜົນ ແທ່ງບຸນ ບ້ານ ຫາຍໂສກ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ

### ນັກກວດສອບ

ບໍລິສັດ ເຄພີເອັມຈີ ລາວ ຈຳກັດ, ຊັ້ນ 10, ອາຄານ ໂຣໂຍ່ລສະແຄລ, ຖະໜົນ ສາມແສນໄທ, ບ້ານ ໜອງດ້ວງເໜືອ,
ເມືອງ ສີໂຄດຕະບອງ, ຕູ້ ປ.ນ. 6978, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856 (21) 454240-7



## ຄວາມຮັບຜິດຊອບຂອງຄະນະຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະຜູ້ບໍລິຫານ ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວຈຳກັດ ຜູ້ດຽວ ມີຄວາມຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນ ເພື່ອຮັບປະກັນວ່າເອກະສານລາຍງານການເງິນ ຖືກຕ້ອງຕາມຄວາມເປັນຈິງໃນສາລະສຳຄັນ, ຖານະການເງິນ ຂອງທະນາຄານ ໃນວັນທີ 31 ທັນວາ 2025, ໃບລາຍງານກຳໄລ ຫຼື ຂາດທຶນ ແລະ ສັງລວມລາຍຮັບອື່ນໆ, ໃບລາຍງານສ່ວນປ່ຽນແປງຂອງທຶນ ແລະ ໃບລາຍງານກະແສເງິນສົດ ສຳລັບປີການບັນຊີສິ້ນສຸດໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີ ໃນ ສປປ ລາວ. ໃນການກະກຽມເອກະສານລາຍງານການເງິນ ຜູ້ບໍລິຫານຂອງທະນາຄານ ຕ້ອງໄດ້ປະຕິບັດດັ່ງນີ້:

- i.) ນຳໃຊ້ນະໂຍບາຍການບັນຊີທີ່ເໝາະສົມ ພ້ອມເອກະສານປະກອບ ຢ່າງສົມເຫດສົມຜົນ, ພ້ອມການຕັດສິນຄາດຄະເນຢ່າງຮອບຄອບ ແລະ ພ້ອມນຳມາປະຕິບັດຢ່າງຕໍ່ເນື່ອງ
- ii.) ສອດຄ່ອງກັບລະບຽບການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ, ໃນກໍລະນີຫາກມີຄວາມແຕກຕ່າງທາງດ້ານຜົນປະໂຫຍດ ໃນການນຳສະເໜີຕາມຄວາມເປັນຈິງ ຕ້ອງຮັບປະກັນວ່າເອກະສານລາຍງານເຫຼົ່ານີ້ໄດ້ເປີດເຜີຍຂໍ້ມູນຢ່າງເໝາະສົມ, ພ້ອມອະທິບາຍໃຫ້ເຫດຜົນຕົວຈິງທີ່ສົມເຫດສົມຜົນໃນເອກະສານລາຍງານການເງິນ;
- iii.) ເກັບຮັກສາເອກະສານການບັນທຶກບັນຊີຢ່າງຄົບຖ້ວນ ແລະ ລະບົບການຄຸ້ມຄອງພາຍໃນຢ່າງມີປະສິດທິພາບ;
- iv.) ປະຕິບັດຂັ້ນຕອນທີ່ສົມເຫດສົມຜົນ ເພື່ອຄວາມປອດໄພຂອງຊັບສິນຂອງທະນາຄານ ແລະ ເພື່ອຫຼີກລ່ຽງ ແລະ ກວດພົບການສໍ້ໂກງ, ຂໍ້ຜິດພາດ ແລະ ສິ່ງຜິດປົກກະຕິອື່ນໆ;
- v.) ກະກຽມເອກະສານລາຍງານການເງິນ ບົນພື້ນຖານຄວາມສືບເນື່ອງ ໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ທາງທະນາຄານຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າບໍ່ເໝາະສົມທີ່ທາງທະນາຄານ ຈະດຳເນີນງານຕໍ່ໄປໃນອະນາຄົດ; ແລະ
- vi.) ຄຸ້ມຄອງ ແລະ ຊີ້ນຳທະນາຄານຢ່າງມີປະສິດທິພາບ, ມີສ່ວນຮ່ວມໃນການຕັດສິນໃຈຕໍ່ບັນຫາສຳຄັນ ທີ່ອາດມີຜົນກະທົບຕໍ່ການດຳເນີນງານຂອງທະນາຄານ ແລະ ຜົນດຳເນີນງານ ແລະ ທະນາຄານຄວນສະແດງ ໃຫ້ເຫັນວ່າຜົນຂອງການຕັດສິນໃຈດັ່ງກ່າວນັ້ນ ແມ່ນສາມາດເຫັນຜົນໄດ້ໃນເອກະສານລາຍງານການເງິນຂອງທະນາຄານ.

ຄະນະຜູ້ບໍລິຫານຂໍຢັ້ງຢືນວ່າໄດ້ປະຕິບັດຕາມເງື່ອນໄຂ ທີ່ກ່າວມາຂ້າງເທິງຢ່າງຄົບຖ້ວນ ໃນການກະກຽມເອກະສານລາຍງານການເງິນ

## ການຮັບຮອງເອກະສານລາຍງານການເງິນ

ຂ້າພະເຈົ້າ, ທ່ານ Phan Thanh Tuan, ຕາງໜ້າຄະນະຜູ້ບໍລິຫານ ຂໍຮັບຮອງວ່າ ເອກະສານລາຍງານການເງິນ ຈາກໜ້າ 06 ຫາ 37 ແມ່ນນຳສະເໜີຢ່າງເໝາະສົມຕາມຄວາມເປັນຈິງໃນສາລະສຳຄັນທັງໝົດ, ຖານະການເງິນຂອງທະນາຄານໃນວັນທີ 31 ທັນວາ 2025, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີການບັນຊີສິ້ນສຸດ ແມ່ນສອດຄ່ອງກັບລະບຽບການບັນຊີຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປລາວ.

**ເຊັນຕາງໜ້າຄະນະຜູ້ບໍລິຫານ**

**ທ່ານ Phan Thanh Tuan**
**ຜູ້ອຳນວຍການໃຫຍ່**
31 ມີນາ 2026

## ບົດລາຍງານຂອງຜູ້ກວດສອບອິດສະລະ

### ຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນ ຂອງ ທະນາຄານ ໄຊງ່ອນເທືອງຕິ່ນ ລາວຈຳກັດ ຜູ້ດຽວ (“ທະນາຄານ”), ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນ ໃນວັນທີ 31 ທັນວາ 2025, ໃບລາຍງານຜົນການດຳເນີນງານ, ໃບລາຍງານການປ່ຽນແປງຂອງທຶນ ແລະ ໃບລາຍງານກະແສເງິນສົດ ສຳລັບປີການບັນຊີສິ້ນສຸດວັນດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ເຊິ່ງປະກອບດ້ວຍບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍແບບເພີ່ມເຕີມອື່ນໆ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນ ແມ່ນໄດ້ນຳຖືກະກຽມໃນທຸກສາລະສຳຄັນ, ໃບລາຍງານຖານະການເງິນ ຂອງທະນາຄານ ນະວັນທີ 31 ທັນວາ 2025 ແລະ ຜົນການດຳເນີນງານທາງດ້ານການເງິນ ແລະ ກະແສເງິນສົດ ສຳລັບປີການບັນຊີສິ້ນສຸດວັນດຽວກັນ ແມ່ນສອດຄ່ອງກັບຫຼັກການບັນຊີ ຕາມທີ່ໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍຂໍ້ 2 ແລະ 3.

### ການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບບັນຊີ ຕາມມາດຕະຖານການກວດສອບບັນຊີສາກົນ (“ISAs”). ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າໄດ້ກ່າວໄວ້ໃນສ່ວນຂອງ ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີ ຕໍ່ເອກະສານລາຍງານການເງິນ ໃນບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າມີຄວາມເປັນອິດສະລະ ຈາກທະນາຄານຕາມຂໍ້ກຳນົດກົດຈັນຍາບັນສາກົນຂອງຜູ້ປະກອບການວິຊາຊີບບັນຊີ ທີ່ກຳນົດໂດຍຄະນະກຳມະການຈັນຍາບັນສາກົນສຳລັບນັກບັນຊີ (ລວມທັງມາດຕະຖານອິດສະລະສາກົນ) (IESBA Code) ພ້ອມກັບກົດຈັນຍາບັນອື່ນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ, ແລະ ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບດ້ານຈັນຍາບັນອື່ນໆ ເຊິ່ງເປັນໄປຕາມຂໍ້ກຳນົດເຫຼົ່ານັ້ນ. ພວກຂ້າ ພະເຈົ້າເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບພຽງພໍ ແລະ ເໝາະສົມເພື່ອໃຊ້ເປັນເກນໃນການສະແດງຄຳເຫັນຂອງພວກຂ້າພະເຈົ້າ.

### ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ ທີ່ຖືກຕ້ອງຕາມນະໂຍບາຍການບັນຊີຂອງທະນາຄານດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 2 ແລະ 3 ຂອງເອກະສານລາຍງານການເງິນ, ແລະ ສຳລັບການຄວບຄຸມພາຍໃນທີ່ຜູ້ບໍລິຫານພິຈາລະນາວ່າຈຳເປັນ ເພື່ອໃຫ້ສາມາດກະກຽມເອກະສານລາຍງານການເງິນ ທີ່ປາດສະຈາກການບິດເບືອນຂໍ້ມູນຈາກຄວາມເປັນຈິງອັນເປັນສາລະສຳຄັນ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດອື່ນໆ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງທະນາຄານ ໃນການສືບເນື່ອງຂອງການດຳເນີນທຸລະກິດ, ການເປີດເຜີຍຕາມຄວາມເໝາະສົມ ແລະ ການນຳໃຊ້ຫຼັກການບັນຊີ ກ່ຽວກັບການສືບເນື່ອງຂອງການດຳເນີນງານ ເວັ້ນເສຍແຕ່ຜູ້ບໍລິຫານມີຈຸດປະສົງທີ່ຈະຍົກເລີກ ຫຼື ຢຸດຕິການດຳເນີນງານ ຫຼື ບໍ່ສາມາດດຳເນີນງານຕໍ່ໄປໄດ້.

### ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ການກວດສອບເອກະສານລາຍງານການເງິນ

ການກວດສອບຂອງພວກຂ້າພະເຈົ້າ ມີວັດຖຸປະສົງເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ວ່າເອກະສານລາຍງານການເງິນໂດຍລວມແມ່ນປາສະຈາກຂໍ້ຜິດພາດທີ່ມີສາລະສຳຄັນ, ການສໍ້ໂກງ ຫຼື ຂໍ້ຜິດພາດ, ແລະ ອອກລາຍງານຂອງຜູ້ກວດສອບ ເຊິ່ງລວມຄຳເຫັນຂອງພວກຂ້າພະເຈົ້າ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງ ແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບສາກົນ ຈະສາມາດກວດສອບຂໍ້ຜິດພາດ ທີ່ມີສາລະສຳຄັນທີ່ມີຢູ່ ຂໍ້ຜິດພາດອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າມີສາລະສຳຄັນຖ້າແຕ່ລະລາຍການ ຫຼື ຫຼາຍລາຍການລວມກັນ, ພວກມັນອາດມີຜົນຕໍ່ການຕັດສິນໃຈ ທາງເສດຖະກິດຂອງຜູ້ໃຊ້ ເອກະສານລາຍງານການເງິນເຫຼົ່ານີ້.

ໃນສ່ວນການກວດສອບຕາມ ISAs, ພວກຂ້າພະເຈົ້າໄດ້ໃຊ້ການພິຈາລະນາ ທາງດ້ານວິຊາຊີບ ແລະ ສົງໄສຢ່າງຜູ້ປະກອບວິຊາຊີບຕະຫຼອດການກວດສອບ. ພວກຂ້າພະເຈົ້າຍັງໄດ້:



- ກຳນົດ ແລະ ປະເມີນຄວາມສ່ຽງຈາກການສະແດງຂໍ້ມູນທີ່ຂັດຕໍ່ຂໍ້ເທັດຈິງ ອັນເປັນສາລະສຳຄັນ ໃນເອກະສານລາຍງານການເງິນ, ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ໃນການອອກແບບ ແລະ ປະຕິບັດຕາມຂັ້ນຂອງການກວດສອບ ເພື່ອຮັບມືກັບຄວາມສ່ຽງເຫຼົ່ານັ້ນ ແລະ ໄດ້ຮັບຫຼັກຖານໃນການກວດສອບບັນຊີທີ່ພຽງພໍ ແລະ ເໝາະສົມເພື່ອເປັນເກນໃນການສະແດງຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການກວດສອບບໍ່ພົບຂໍ້ຜິດພາດທີ່ມີສາລະສຳຄັນທີ່ເກີດຈາກການສໍ້ໂກງສູງ ກວ່າຂໍ້ຜິດພາດທີ່ເນື່ອງມາຈາກການສໍ້ໂກງ ອາດຈະກ່ຽວກັບການສົມຮູ້ຮ່ວມຄິດ, ການປອມແປງເອກະສານຫຼັກຖານ, ລະເລີຍໂດຍເຈດຕະນາ ບິດເບືອນຈາກຄວາມຈິງ ຫຼື ການແຊກແຊງການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈຕໍ່ການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບໃນການອອກແບບຂັ້ນຕອນການກວດສອບທີ່ມີຄວາມເໝາະສົມຕາມສະຖານະການ, ແຕ່ບໍ່ແມ່ນສຳລັບຈຸດປະສົງຂອງການສະແດງຄຳເຫັນກ່ຽວກັບປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານໄດ້.

- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີການນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການປະເມີນການບັນຊີ ແລະ ເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ເຮັດໂດຍຜູ້ບໍລິຫານ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງຫຼັກການບັນຊີທີ່ນຳໃຊ້ ສຳລັບການດຳເນີນງານຕໍ່ເນື່ອງ ຂອງຜູ້ບໍລິຫານ ແລະ ຈາກຫຼັກຖານການກວດສອບທີ່ໄດ້ຮັບ, ສະຫຼຸບວ່າມີຄວາມບໍ່ແນ່ນອນທີ່ມີສາລະສຳຄັນກ່ຽວກັບເຫດການ ຫຼື ສະຖາ ນະການທີ່ອາດເປັນເຫດໃຫ້ເກີດຂໍ້ສົງໄສຢ່າງມີສາລະສຳຄັນ ຕໍ່ຄວາມສາມາດຂອງທະນາຄານໃນການດຳເນີນງານຕໍ່ເນື່ອງ. ຖ້າຫາກວ່າພວກຂ້າພະເຈົ້າໄດ້ຂໍ້ສະຫຼຸບວ່າມີຄວາມບໍ່ແນ່ນອນທີ່ມີສາລະສຳຄັນ, ພວກຂ້າພະເຈົ້າຕ້ອງໄດ້ກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບອິດສະລະ ເຖິງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງ ໃນບົດລາຍງານຖານະການເງິນ ຫຼື ຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍ ຄຳເຫັນຂອງພວກຂ້າພະເຈົ້າຈະປ່ຽນໄປ, ພວກຂ້າພະເຈົ້າສະຫຼຸບແມ່ນອີງໃສ່ຫຼັກຖານການກວດສອບທີ່ໄດ້ຮັບເຖິງວັນທີຂອງບົດລາຍງານ. ຢ່າງໃດກໍຕາມ, ເຫດການ ຫຼື ເງື່ອນໄຂໃນອະນາຄົດອາດຈະເຮັດໃຫ້ທະນາຄານຢຸດການດຳເນີນງານຕໍ່ເນື່ອງ.

- ການປະເມີນຜົນການນຳສະເໜີໂດຍລວມ, ໂຄງຮ່າງ ແລະ ເນື້ອໃນຂອງເອກະສານລາຍງານການເງິນ ລວມທັງການເປີດເຜີຍຂໍ້ມູນ ແລະ ການນຳສະເໜີເອກະສານລາຍງານການເງິນ, ການສະແດງລາຍການ ແລະ ເຫດການໃນຮູບແບບທີ່ເຮັດໃຫ້ມີການນຳສະເໜີຂໍ້ມູນໂດຍຖືກຕ້ອງຕາມທີ່ຄວນ.

ພວກຂ້າພະເຈົ້າຕິດຕໍ່ກັບຜູ້ບໍລິຫານກ່ຽວກັບໃນເລື່ອງອື່ນໆ, ຂອບເຂດການວາງແຜນ ແລະ ກຳນົດເວລາໃນການກວດສອບຕາມທີ່ໄດ້ວາງແຜນໄວ້ ປະເດັນທີ່ສາລະສຳຄັນ, ລວມເຖິງຂໍ້ບົກຜ່ອງທີ່ມີສາລະສຳຄັນໃນລະບົບການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າອາດກວດພົບ ໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

**ຕາງໜ້າ ບໍລິສັດ ເຄພີເອັມຈີ ລາວ ຈຳກັດ.**

ທ່ານ ເຈດສະດາ ລີລາວັດທະນະສຸກ
ນັກກວດສອບຕາມກົດໝາຍ
ລະຫັດ ເລກທີ: SA0061/2024
ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2026

# ໃບລາຍງານຖານະການເງິນ

ສຳລັບປີການບັນຊີສິ້ນສຸດ 31 ທັນວາ 2025

| | ບົດອະທິບາຍ ເລກທີ | 31/12/2025 ລ້ານກີບ | 31/12/2024 ລ້ານກີບ |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ | 4 | 23,012 | 26,620 |
| ເງິນຝາກຕາມລະບຽບການຢູ່ທະນາຄານແຫ່ງ ສປປ ລາວ | 6 | 199,688 | 268,722 |
| ໜີ້ຕ້ອງຮັບຈາກທະນາຄານ ແລະ ສະຖາບັນການເງິນອື່ນ | 5 | 665,154 | 545,917 |
| ເງິນລົງທຶນ | 7 | 6,870 | 8,016 |
| ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະ | 8 | 1,515,067 | 1,551,386 |
| ຊັບສົມບັດຄົງທີ່ | 9 | 74,726 | 87,882 |
| ຊັບສິນອື່ນໆ | 10 | 148,616 | 102,559 |
| **ລວມຊັບສິນ** | | **2,633,133** | **2,591,102** |
| | | | |
| **ໜີ້ສິນ ແລະ ທຶນ** | | | |
| **ໜີ້ສິນ** | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນ | 12 | 719,330 | 630,972 |
| ເງິນຝາກຂອງລູກຄ້າ | 11 | 1,266,823 | 1,305,503 |
| ໜີ້ສິນອື່ນໆ | 13 | 160,992 | 72,029 |
| **ລວມໜີ້ສິນ** | | **2,147,145** | **2,008,504** |
| | | | |
| **ທຶນ** | | | |
| ທຶນຈົດທະບຽນ | | 517,131 | 517,131 |
| ຄັງສຳຮອງຕາມລະບຽບການ | 14 | 14,176 | 14,176 |
| ເງິນແຮທົ່ວໄປສຳລັບສິນເຊື່ອ | 8 | 7,445 | 7,628 |
| ກຳໄລສະສົມ | | (52,764) | 43,663 |
| **ລວມທຶນ** | | **485,988** | **582,598** |
| **ລວມໜີ້ສິນ ແລະ ທຶນ** | | **2,633,133** | **2,591,102** |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

ກະກຽມໂດຍ:

ທ່ານ ນາງ ດາວສະຫວັນ ບຸນມີໄຊ
ຮອງຫົວໜ້າພະແນກບໍລິການ

ກວດກາໂດຍ:

ທ່ານ ນາງ ບົວທອງ ສີສະຫວັດ
ຮອງຜູ້ອຳນວຍການໃຫຍ່

ອະນຸມັດໂດຍ:

ທ່ານ Phan Thanh Tuan
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2025



# ໃບລາຍງານກຳໄລ ຫຼື ຂາດທຶນ ແລະ ສັງລວມລາຍຮັບອື່ນໆ

ສຳລັບປີການບັນຊີສິ້ນສຸດ 31 ທັນວາ 2025

| | ບົດອະທິບາຍ ເລກທີ | 31\|12\|2025 ລ້ານກີບ | 31\|12\|2024 ລ້ານກີບ |
|---|---|---|---|
| ລາຍຮັບດອກເບ້ຍ | 15 | 168,053 | 140,040 |
| ລາຍຈ່າຍດອກເບ້ຍ | 16 | (84,726) | (66,049) |
| **ລາຍຮັບດອກເບ້ຍສຸດທິ** | | **83,327** | **73,991** |
| | | | |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | 17 | 17,578 | 37,196 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | 17 | (2,894) | (3,108) |
| ກຳໄລຈາກການຊື້ຂາຍເງິນຕາຕ່າງປະເທດ, ສຸດທິ | | 23,898 | 16,174 |
| **ລາຍຮັບຈາກການດຳເນີນງານ, ສຸດທິ** | | **121,909** | **124,253** |
| | | | |
| ລາຍຮັບການດຳເນີນງານອື່ນໆ | 18 | 6,909 | 15,327 |
| | | | |
| **ລາຍຈ່າຍການດຳເນີນງານ** | | | |
| ເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ | 19(ກ) | (71,204) | (68,776) |
| ລາຍຈ່າຍບໍລິຫານອື່ນໆ | 19(ຂ) | (49,857) | (30,339) |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 9 | (15,479) | (14,652) |
| ລາຍຈ່າຍການດຳເນີນງານອື່ນໆ | 19(ຄ) | (94,480) | (2,996) |
| ລາຍຈ່າຍເງິນແຮສຸດທິສຳລັບການສູນເສຍສິນເຊື່ອ | 8 | 5,775 | (330) |
| **ກຳໄລກ່ອນຫັກອາກອນ** | | **(96,427)** | **22,487** |
| ລາຍຈ່າຍອາກອນກຳໄລ | 20 | - | (4,497) |
| **ກຳໄລສຸດທິ** | | **(96,427)** | **17,990** |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

ກະກຽມໂດຍ:

ທ່ານ ນາງ ດາວສະຫວັນ ບຸນມີໄຊ
ຮອງຫົວໜ້າພະແນກບໍລິການ

ກວດກາໂດຍ:

ທ່ານ ນາງ ບົວທອງ ສີສະຫວັດ
ຮອງຜູ້ອຳນວຍການໃຫຍ່

ອະນຸມັດໂດຍ:

ທ່ານ Phan Thanh Tuan
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2025

# ໃບລາຍງານການປ່ຽນແປງຂອງທຶນ

ສຳລັບປີການບັນຊີສິ້ນສຸດ 31 ທັນວາ 2025

| | ບົດອະທິບາຍ | ທຶນຈົດທະບຽນ ລ້ານກີບ | ຄັງສຳຮອງ ຕາມລະບຽບການ ລ້ານກີບ | ເງິນແຮທົ່ວໄປ ສຳລັບສິນເຊື່ອ ລ້ານກີບ | ກຳໄລສະສົມ ລ້ານກີບ | ລວມ (ລ້ານກີບ) |
|---|---|---|---|---|---|---|
| **ປີສິ້ນສຸດ 31 ທັນວາ 2025** | | | | | | |
| **ຍອດເຫຼືອໃນວັນທີ 1 ມັງກອນ 2025** | | **517,131** | **14,176** | **7,628** | **43,663** | 582,598 |
| ກຳໄລປະຈຳປີ | | - | - | - | (96,427) | (96,427) |
| ສ່ວນປ່ຽນແປງເງິນແຮທົ່ວໄປ | 8 | - | - | (177) | - | (177) |
| ສ່ວນປ່ຽນແປງຈາກອັດຕາແລກປ່ຽນ | | - | - | (6) | - | (6) |
| **ຍອດເຫຼືອໃນວັນທີ 31 ທັນວາ 2025** | | **517,131** | **14,176** | **7,445** | **(52,764)** | 485,988 |
| **ປີສິ້ນສຸດ 31 ທັນວາ 2024** | | | | | | |
| **ຍອດເຫຼືອໃນວັນທີ 1 ມັງກອນ 2024** | | **517,131** | **12,377** | **5,874** | **27,472** | **562,854** |
| ກຳໄລປະຈຳປີ | | - | - | - | 17,990 | 17,990 |
| ໂອນໄປຄັງສຳຮອງຕາມລະບຽບການ | 14 | - | 1,799 | - | (1,799) | - |
| ສ່ວນປ່ຽນແປງເງິນແຮທົ່ວໄປ | 8 | - | - | 1,997 | - | 1,997 |
| ສ່ວນປ່ຽນແປງຈາກອັດຕາແລກປ່ຽນ | | - | - | (243) | - | (243) |
| **ຍອດເຫຼືອໃນວັນທີ 31 ທັນວາ 2024** | | **517,131** | **14,176** | **7,628** | **43,663** | **582,598** |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນສະບັບນີ້.

ກະກຽມໂດຍ:

ທ່ານ ນາງ ດາວສະຫວັນ ບຸນມີໄຊ
ຮອງຫົວໜ້າພະແນກບໍລິການ

ກວດກາໂດຍ:

ທ່ານ ນາງ ບົວທອງ ສີສະຫວັດ
ຮອງຜູ້ອຳນວຍການໃຫຍ່

ອະນຸມັດໂດຍ:

ທ່ານ Phan Thanh Tuan
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2026

# ໃບລາຍງານກະແສເງິນສົດ

ສຳລັບປີການບັນຊີສິ້ນສຸດ 31 ທັນວາ 2025

| ລາຍການ | ບົດອະທິບາຍ ເລກທີ | ສຳລັບປີສິ້ນສຸດ 31 ທັນວາ 2025 ລ້ານກີບ | ສຳລັບປີສິ້ນສຸດ 31 ທັນວາ 2024 ລ້ານກີບ |
|---|---|---|---|
| **ກະແສເງິນສົດຈາກການດຳເນີນງານ** | | | |
| **ກຳໄລກ່ອນອາກອນ** | | **(96,427)** | **22,487** |
| ປັບປຸງສຳລັບ: | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ | 9 | 15,479 | 14,653 |
| ກຳໄລຈາກການຂາຍຊັບສິນ | 9 | (744) | - |
| ຂາດທຶນຈາກການຕັດບັນຊີສິດນຳໃຊ້ຊັບສິນ | | 738 | - |
| ເງິນແຮທົ່ວໄປຂອງເງິນກູ້ | 8 | (5,952) | 2,328 |
| ລາຍຮັບດອກເບ້ຍ | 15 | (168,053) | (140,040) |
| ລາຍຈ່າຍດອກເບ້ຍ | 16 | 84,726 | 66,049 |
| **ລາຍຮັບຈາກການດຳເນີນງານກ່ອນການປ່ຽນແປງຂອງ ຊັບສິນ ແລະ ໜີ້ສິນ** | | **(170,233)** | **(34,523)** |
| (ການເພີ່ມຂຶ້ນ) ຫຼຸດລົງ ໃນຊັບສິນການດຳເນີນງານ | | | |
| ຍອດຄົງເຫຼືອໃນທະນາຄານ ແລະ ສະຖາບັນການເງິນອື່ນ | | 3,120 | (10,481) |
| ເງິນລົງທຶນ | | 1,146 | 1,145 |
| ເງິນກູ້ໃຫ້ແກ່ລູກຄ້າ | | 42,094 | (338,012) |
| ຊັບສິນອື່ນໆ | 10 | (45,160) | (78,346) |
| ການເພີ່ມຂຶ້ນ (ຫຼຸດລົງ) ໃນໜີ້ສິນການດຳເນີນງານ | | | |
| ໜີ້ຕ້ອງສົ່ງລູກຄ້າ | | (38,680) | 137,495 |
| ໜີ້ຕ້ອງສົ່ງທະນາຄານ ແລະ ສະຖານບັນການເງິນອື່ນ | | 88,358 | 175,213 |
| ໜີ້ນສິນອື່ນໆ | | 83,721 | (5,572) |
| ດອກເບ້ຍໄດ້ຮັບ | | 167,151 | 139,313 |
| ດອກເບ້ຍທີ່ຈ່າຍ | | (79,485) | (59,880) |
| ອາກອນກຳໄລຊຳລະພາຍໃນປີ | | - | (4,191) |
| **ເງິນສົດສຸດທິ ທີ່ໃຊ້ໃນກິດຈະກຳການດຳເນີນງານ** | | **52,032** | **(77,839)** |
| | | | |
| **ກະແສເງິນສົດ ຈາກກິດຈະກຳການລົງທຶນ** | | | |
| ຊື້ຊັບສິມບັດຄົງທີ່ບໍ່ມີຕົວຕົນ | | (627) | (2,184) |
| ຊື້ຊັບສິມບັດຄົງທີ່ມີຕົວຕົນ | | (2,434) | (3,468) |
| ລາຍຮັບຈາກການຂາຍຊັບສິມບັດຄົງທີ່ | | 744 | - |
| **ເງິນສົດສຸດທິ ທີ່ໃຊ້ໃນກິດຈະກຳການລົງທຶນ** | | **(2,317)** | **(5,652)** |
| **ການປ່ຽນແປງ ເງິນສົດ ແລະ ທຽບເທົ່າເງິນສົດ** | | **49,715** | **(83,491)** |
| ເງິນສົດ ແລະ ທຽບເທົ່າເງິນສົດ ໃນວັນທີ 1 ມັງກອນ | | 551,004 | 634,495 |
| **ເງິນສົດ ແລະ ທຽບເທົ່າເງິນສົດ ໃນວັນທີ 31 ທັນວາ** | 24 | **600,719** | **551,004** |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນສະບັບນີ້

| ກະກຽມໂດຍ: | ກວດກາໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນາງ ດາວສະຫວັນ ບຸນມີໄຊ<br>ຮອງຫົວໜ້າພະແນກບໍລິການ | ທ່ານ ນາງ ບົວທອງ ສີສະຫວັດ<br>ຮອງຜູ້ອຳນວຍການໃຫຍ່ | ທ່ານ Phan Thanh Tuan<br>ຜູ້ອຳນວຍການໃຫຍ່ |

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2026



# ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ

ສຳລັບປີການບັນຊີສິ້ນສຸດ 31 ທັນວາ 2025

## 1 ຂໍ້ມູນທົ່ວໄປ ແລະ ກິດຈະກຳຫຼັກຂອງທະນາຄານ

ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ ເບື້ອງຕົ້ນແມ່ນສ້າງເປັນສາຂາຂອງທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນ ເທືອງຕິ່ນ ("ຊາຄອມແບັງ"), ເຊິ່ງເປັນທະນາຄານທີ່ດຳເນີນທຸລະກິດໃນປະເທດຫວຽດນາມ. ທະນາຄານດຳເນີນທຸລະກິດ ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ເລກທີ 55 ອອກໃຫ້ໂດຍ ທະນາຄານແຫ່ງ ສປປ ລາວ ("ທຫລ") ລົງວັນທີ 9 ທັນວາ 2008.

ໃນວັນທີ 1 ສິງຫາ 2015, ສະຖານະພາບທາງກົດຫມາຍຂອງທະນາຄານຖືກປ່ຽນຮູບແບບເປັນ ບໍລິສັດຈຳກັດເອກະຊົນ ທີ່ ຊາຄອມແບັງເປັນເຈົ້າຂອງທັງຫມົດຕາມການອະນຸມັດຂອງ ທຫລ ພາຍໃຕ້ໃບອະນຸຍາດຳເນີນທຸລະກິດທະນາຄານ ເລກທີ 15 ລົງວັນທີ 9 ມິຖຸນາ 2014. ໃນວັນທີ 13 ທັນວາ 2021, ທະນາຄານໄດ້ຮັບໃບອະນຸຍາດດຳເນີນທຸລະກິດການທະນາ ຄານ ສະບັບລ່າສຸດເລກທີ 07 ແລະ ໃບອະນຸຍາດດຳເນີນທຸລະກິດສະບັບປັບປຸງເລກທີ 3474/ຈທວ, ລົງວັນທີ 10 ພະຈິກ 2023. ກິດຈະກຳຫຼັກຂອງທະນາຄານແມ່ນ ໃຫ້ບໍລິການທາງດ້ານການທະນາຄານ ແລະ ການບໍລິການທາງການເງິນອື່ນໆໃນ ສປປ ລາວ.

ນະວັນທີ 31 ທັນວາ 2025, ທຶນຈົດທະບຽນທີ່ໄດ້ຖອກແລ້ວຂອງທະນາຄານແມ່ນ 517,130,539,793 ກີບ (ນະວັນທີ 31 ທັນວາ 2024: 517,130,539,793 ກີບ).

ຜູ້ຕາງຫນ້າຕາມກົດຫມາຍຂອງທະນາຄານໃນລະຫວ່າງປີສິ້ນສຸດວັນທີ 31 ທັນວາ 2025 ແມ່ນ
ທ່ານ Phan Thanh Tuan – ຜູ້ອຳນວຍການໃຫຍ່

ພະນັກງານທັງໝົດຂອງທະນາຄານ ນະວັນທີ 31 ທັນວາ 2025 ແມ່ນ 125 ຄົນ (2024: 173 ຄົນ).

## 2 ພື້ນຖານຂອງການກະກຽມເອກະສານລາຍງານການເງິນ

### (ກ) ພື້ນຖານການບັນຊີທົ່ວໄປ

### (i) ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນໄດ້ສະແດງກະກຽມເປັນຫົວໜ່ວຍລາວກີບ ("ກີບ") ໂດຍສອດຄ່ອງກັບຂໍ້ຕົກລົງເລກທີ 02/ນຍ ອອກໃຫ້ໂດຍນາຍົກລັດຖະມົນຕີແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000 ວ່າດ້ວຍ ກົດໝາຍບັນຊີວິສາຫະກິດຂອງ ສປປ ລາວ ແລະ ຫຼັກການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີ ໃນ ສປປ ລາວ. ເຊິ່ງເປັນສະກຸນເງິນທີ່ໃຊ້ໃນ ການດຳເນີນງານຂອງທະນາຄານ.

ເອກະສານລາຍງານການເງິນຕາມລະບຽບການບັນຊີຂອງທະນາຄານແຫ່ງ ສປປ ລາວ ແລະ ກົດລະບຽບບັນຊີຂອງ ສປປ ລາວ ເຊິ່ງອາດຈະແຕກຕ່າງຈາກການລາຍງານຕາມມາຕະຖານການລາຍງານຖານະການເງິນແບບສາກົນ ແລະ ລະບຽບຫຼັກການ ບັນຊີທີ່ມີການຍອມຮັບ ແລະ ປະຕິບັດໃນປະເທດອື່ນໆ. ດັ່ງນັ້ນ ເອກະສານລາຍງານການເງິນນີ້ບໍ່ມີຈຸດປະສົງທີ່ຈະສະແດງ ຖານະການເງິນ. ຜົນຂອງການດຳເນີນງານ. ການປ່ຽນແປງຂອງບັນຊີສຳນັກງານໃຫຍ່ ແລະ ກະແສເງິນສົດຕາມຫຼັກການບັນຊີ ທີ່ຖືກຍອມຮັບຕາມນະໂຍບາຍບັນຊີ ແລະ ການປະຕິບັດໂດຍທົ່ວໄປໃນບັນດາປະເທດ ແລະ ຂົງເຂດອື່ນໆທີ່ນອກເໜືອຈາກ ສປປ ລາວ. ນອກຈາກນີ້.ເອກະສານລາຍງານການເງິນສະບັບນີ້ບໍ່ໄດ້ຖືກສ້າງຂຶ້ນໃຫ້ຜູ້ທີ່ບໍ່ຮູ້ກ່ຽວກັບນະໂຍບາຍບັນຊີ. ການ ດຳເນີນງານ ແລະ ການປະຕິບັດກົດໝາຍ ແລະ ຂໍ້ກຳນົດຂອງ ສປປ ລາວ.

ເອກະສານລາຍງານການເງິນນີ້ ແມ່ນໄດ້ຖືກອະນຸມັດໃຫ້ສ້າງຂຶ້ນໂດຍຄະນະຜູ້ບໍລິຫານ ໃນວັນທີ 31 ມີນາ 2026.

### (ii) ພື້ນຖານການປະເມີນ

ເອກະສານລາຍງານການເງິນ ແມ່ນໄດ້ກະກຽມຂຶ້ນຕາມຫຼັກການຕົ້ນທຶນເດີມ ດັ່ງທີ່ໄດ້ກ່າວໄວ້ໃນນະໂຍບາຍການບັນຊີ. ນະ ໂຍບາຍການບັນຊີດັ່ງກ່າວ ແມ່ນໄດ້ຖືກນຳໃຊ້ຢ່າງສອດຄ່ອງກັບທະນາຄານ ແລະ ສອດຄ່ອງກັບຫຼັກການທີ່ໄດ້ນຳໃຊ້ໃນປີ ຜ່ານມາ. ນອກຈາກ ມີຂໍ້ຍົກເວັ້ນກ່າວເຖິງ.

### (iii) ການປະເມີນ ແລະ ການພິຈາລະນາທາງບັນຊີ

ໃນການກະກຽມເອກະສານລາຍງານການເງິນຂອງທະນາຄານ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງມີການພິຈາລະນາ, ການ ຄາດຄະເນ ແລະ ສົມມຸດຕິຖານຕາມການຈັດການຕໍ່ສະພາບປະຈຸບັນ ແລະ ການປະຕິບັດທີ່ມີຜົນກະທົບຕໍ່ການນຳໃຊ້ນະໂຍ ບາຍການບັນຊີ ແລະ ການລາຍງານມູນຄ່າຂອງຊັບສິນ, ໜີ້ສິນ, ລາຍຮັບ, ລາຍຈ່າຍ ແລະ ການເປີດເຜີຍໜີ້ສິນທີ່ອາດເກີດ ຂຶ້ນໃນວັນທີ່ລາຍງານ. ການຄາດຄະເນ ແລະ ການສົມມຸດຖານແມ່ນໄດ້ຖືກທົບທວນຄືນຢ່າງຕໍ່ເນື່ອງ. ຜົນໄດ້ຮັບທີ່ແທ້ຈິງ ອາດຈະແຕກຕ່າງຈາກການປະເມີນຂອງການບໍລິຫານ ແລະ ສ່ວນແຕກຕ່າງເຫຼົ່ານັ້ນອາດຈະຄວາມຈຳເປັນທີ່ຈະຕ້ອງມີການແກ້ ໄຂທີ່ໃຫ້ເປັນທີ່ຍອມຮັບໃນໄລຍະທີ່ການປະເມີນ ຖືກມີການແກ້ໄຂ ແລະ ໃນໄລຍະທີ່ຈະໄດ້ຮັບຜົນກະທົບໃນອະນາຄົດ.

### (ຂ) ປີການບັນຊີ

ປີການບັນຊີຂອງທະນາຄານ ແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

## 3 ນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍທາງດ້ານບັນຊີທີ່ສຳຄັນດັ່ງລຸ່ມນີ້ ແມ່ນທະນາຄານໄດ້ນຳໃຊ້ເຂົ້າໃນການກະກຽມເອກະສານລາຍງານການເງິນໃນແຕ່ລະປີຢ່າງຕໍ່ເນື່ອງ.

ນະໂຍບາຍການບັນຊີທີ່ທະນາຄານໄດ້ຮັບຮອງໃນການກະກຽມບົດລາຍງານການເງິນເຫຼົ່ານີ້ແມ່ນສອດຄ່ອງກັບນະໂຍບາຍທີ່ນຳໃຊ້ໃນການກະກຽມບົດລາຍງານການເງິນຂອງທະນາຄານສຳລັບປີທີ່ສິ້ນສຸດລົງ 31 ທັນວາ 2024

### (ກ) ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດ

ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດ ແມ່ນໄດ້ຖືກປ່ຽນເປັນສະກຸນເງິນກີບ ໂດຍໃຊ້ອັດຕາແລກປ່ຽນໃນມື້ທີລາຍການເຄື່ອນໄຫວ ດັ່ງກ່າວເກີດຂຶ້ນ.

ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕາຕ່າງປະເທດໃນມື້ລາຍງານ ແມ່ນໄດ້ແປງຄ່າເປັນສະກຸນເງິນກີບໃນມື້ທີ່ລາຍການເຄື່ອນໄຫວດັ່ງກ່າວເກີດຂຶ້ນ. ສ່ວນແຕກຕ່າງຂອງອັດຕາແລກປ່ຽນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ແມ່ນໄດ້ຖືກນຳມາສະເໜີໃນໃບລາຍງານຜົນໄດ້ຮັບ.

ຊັບສິນ ແລະ ໜີ້ສິນທີ່ບໍ່ແມ່ນທາງການເງິນຖືກຄິດໄລ່ທີ່ສະກຸນເງິນຕາຕ່າງປະເທດເປັນເງິນກີບໂດຍໃຊ້ອັດຕາ ແລກປ່ຽນໃນມື້ທີ່ເກີດລາຍການ.

ອັດຕາແລກປ່ຽນທີ່ບັງຄັບສຳລັບເງິນກີບທຽບເທົ່າກັບສະກຸນເງິນຕ່າງປະເທດອື່ນ ມີດັ່ງຕໍ່ໄປນີ້:

| | 31/12/2025<br>ກີບ | 31/12/2024<br>ກີບ |
|---|---|---|
| ໂດລາສະຫະລັດ ("ໂດລາສະຫະລັດ") | 21,461.00 | 21,562.00 |
| ໄທບາດ ("ໄທບາດ") | 680.78 | 624.33 |

### (ຂ) ເຄື່ອງມືທາງດ້ານການເງິນ

ເຄື່ອງມືທາງດ້ານການເງິນຂອງທະນາຄານປະກອບມີ ຊັບສິນ ແລະ ໜີ້ສິນ ລວມທັງເງິນ-ສົດ ແລະ ທຽບເທົ່າເງິນສົດ. ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ (ຊັບສິນ). ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ. ເງິນຝາກຂອງລູກຄ້າ ແລະ ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ (ໜີ້ສິນ) ແລະ ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອື່ນໆ. ນະໂຍບາຍການບັນຊີສຳລັບການຮັບຮູ້ ແລະ ການປະເມີນລາຍການເຫຼົ່ານີ້ ແມ່ນໄດ້ຖືກເປີດເຜີຍໄວ້ໃນນະໂຍບາຍການບັນຊີຕາມລຳດັບ.

### (ຄ) ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດປະກອບມີ: ເງິນສົດ ແລະ ເງິນລົງທຶນໄລຍະສັ້ນ ທີ່ມີສະພາບຄ່ອງສູງ ມື້ຄົບກຳນົດ ແມ່ນໜ້ອຍກວ່າ ຫຼື ເທົ່າກັບ 30 ມື້ ທີ່ສາມາດປ່ຽນເປັນເງິນສົດ ແລະ ບັນຊີລູກໜີ້ກັບທະນາຄານໜ້ອຍກວ່າ ຫຼື ເທົ່າກັບ 30 ມື້.

### (ງ) ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ

ເງິນຝາກກັບທະນາຄານອື່ນແມ່ນຖືກບັນທຶກຕາມມູນຄ່າຕົວຈິງ.

### (ຈ) ເງິນລົງທຶນ

ເງິນລົງທຶນໃນການຊື້ພັນທະບັດຂອງກະຊວງການເງິນ ແມ່ນຖືກບັນທຶກຕາມມູນຄ່າຊື້.

### (ສ) ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ

ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແມ່ນມາຈາກການສະໜອງເງິນ ຂອງທະນາຄານໃຫ້ແກ່ລູກຄ້າທີ່ນອກເໜືອຈາກການເກນກຳໄລໃນໄລຍະສັ້ນ. ການນຳສະເໜີແມ່ນມາຈາກຍອດຄົງເຫຼືອຫັກລົບ ເງິນແຮຄ່າສູນເສຍມູນຄ່າສຳລັບໜີ້ເສຍ ແລະ ໜີ້ສົງໃສເງິນກູ້ ແລະ ເງິນລ່ວງໜ້າ. ເພື່ອສະທ້ອນໃຫ້ເຫັນເຖິງຍອດທີ່ສາມາດຮຽກເກັບຄືນໄດ້. ເງິນກູ້ ແລະ ເງິນລ່ວງໜ້າ. ຍົກເວັ້ນເງິນເບີກເກີນບັນຊີຖືກສະແດງໂດຍບໍ່ລວມດອກເບ້ຍຕ້ອງຮັບ.





## 3 ນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ(ຕໍ່)

### (ຊ) ເງິນແຮສຳລັບໜີ້ເສຍ ແລະ ໜີ້ຕ້ອງສົງໃສ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ຂໍ້ຕົກລົງເລກທີ 512/ທຫລ

ອີງຕາມຂໍ້ຕົກລົງເລກທີ 512/ທຫລ (“ທຫລ 512”) ທະນາຄານຈຳເປັນຕ້ອງໄດ້ຈັດຊັ້ນໜີ້ເງິນກູ້ ແລະ ຫັກເງິນແຮສຳລັບຄ່າເສື່ອມຂາດທຶນ. ດັ່ງນັ້ນ, ເງິນກູ້ຈຶ່ງໄດ້ຖືກຈັດຊັ້ນເປັນສິນເຊື່ອທີ່ເກີດດອກອອກຜົນ ຫຼື ສິນເຊື່ອທີ່ບໍ່ເກີດດອກອອກຜົນ ອີງຕາມສະຖານະຂອງເງິນຄ້າງຊຳລະ ແລະ ປັດໄຈດ້ານຄຸນນະພາບອື່ນໆ, ສິນເຊື່ອທີ່ຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ແມ່ນພິຈາລະນາເປັນສິນເຊື່ອທີ່ເກີດດອກອອກຜົນ, ເງິນກູ້ທີ່ຈັດຊັ້ນໜີ້ທີ່ຄວນເອົາໃຈໃສ່ (ກຸ່ມ B) ຫຼື ຕ່ຳກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນໄດ້ພິຈາລະນາເປັນສິນເຊື່ອທີ່ບໍ່ເກີດດອກອອກຜົນ.

ຕາມຂໍ້ຕົກລົງ ທຫລ 512, ທະນາຄານຕ້ອງໄດ້ສ້າງເງິນແຮທົ່ວໄປໃນອັດຕາຄົງທີ 0.5% ຂອງຍອດເຫຼືອທັງໝົດຂອງສິນເຊື່ອປົກກະຕິ ນະວັນທີ່ລາຍງານ, ຄວບຄູ່ກັນກັບ, ການຫັກເງິນແຮສະເພາະສຳລັບໜີ້ທີ່ຄວນເອົາໃຈໃສ່, ໜີ້ຕ່ຳກວ່າມາດຕະຖານ, ໜີ້ສົງໄສ ແລະ ໜີ້ສູນ ໂດຍຄູນກັບຍອດຍັງເຫຼືອຂອງເງິນກູ້ແຕ່ລະລາຍການຫັກດ້ວຍເງິນຄ້ຳປະກັນ (ຖ້າມີ) ເພື່ອໃຫ້ສອດຄ່ອງກັບຂໍ້ຕົກລົງຂອງ ທຫລ ແລະ ອັດຕາການຫັກເງິນແຮທີ່ນຳໃຊ້ ຕາມການຈັດຊັ້ນໜີ້ ມີດັ່ງນີ້:

| ການຈັດຊັ້ນໜີ້ | ຈຳນວນມື້ເກີນກຳນົດຈ່າຍ | ອັດຕາການຫັກເງິນແຮ |
|---|---|---|
| ໜີ້ປົກກະຕິ (A) | 0 – 29 ວັນ | 0.5% |
| ໜີ້ຄວນເອົາໃຈໃສ່ (B) | 30 – 89 ວັນ | 3% |
| ໜີ້ຕ່ຳກວ່າມາດຕະຖານ (C) | 90 – 179 ວັນ | 20% |
| ໜີ້ສົງໄສ (D) | 180 – 359 ວັນ | 50% |
| ໜີ້ສູນ (E) | ຫຼາຍກວ່າ 360 ວັນ | 100% |

ອັດຕາສ່ວນສິດທິປະໂຫຍດສູງສຸດຂອງຫຼັກຊັບຄ້ຳປະກັນທີ່ໄດ້ຮັບອະນຸຍາດພາຍໃຕ້ ທຫລ 512, ມີດັ່ງນີ້:

| ປະເພດຂອງຫຼັກຊັບຄ້ຳປະກັນ | ອັດຕາສ່ວນສູງສຸດທີ່ໄດ້ຮັບອະນຸຍາດ |
|---|---|
| (ກ) ເງິນຝາກກັບທະນາຄານ | |
| - ໃນສະກຸນດຽວກັບສິນເຊື່ອ | 100% |
| - ໃນສະກຸນເງິນທີ່ແຕກຕ່າງກັບສິນເຊື່ອ | 95% |
| (ຂ) ຝາກຄ້ຳໄວ້ກັບທະນາຄານ | 90% |
| (ຄ) ພັນທະບັດລັດຖະບານ ແລະ ພັນທະບັດ ທຫລ | |
| - ໃນສະກຸນດຽວກັບສິນເຊື່ອ | |
| • ໄລຍະເວລາທີ່ເຫຼືອຕ່ຳກວ່າ 1 ປີ | 100% |
| • ໄລຍະເວລາທີ່ເຫຼືອຢູ່ລະຫວ່າງ 1 ປີ ຫາ 5 ປີ | 90% |
| • ໄລຍະເວລາທີ່ເຫຼືອຫຼາຍກວ່າ 5 ປີ | 80% |
| - ໃນສະກຸນເງິນທີ່ແຕກຕ່າງກັບສິນເຊື່ອ | |
| • ໄລຍະເວລາທີ່ເຫຼືອຕ່ຳກວ່າ 1 ປີ | 95% |
| • ໄລຍະເວລາທີ່ເຫຼືອຢູ່ລະຫວ່າງ 1 ປີ ຫາ 5 ປີ | 85% |
| • ໄລຍະເວລາທີ່ເຫຼືອຫຼາຍກວ່າ 5 ປີ | 75% |
| (ງ) ເງິນຝາກກັບທະນາຄານອື່ນ ຫຼື ສະຖາບັນການເງິນ | |
| • ໄລຍະເວລາທີ່ເຫຼືອຕ່ຳກວ່າ 1 ປີ | 80% |
| • ໄລຍະເວລາທີ່ເຫຼືອຢູ່ລະຫວ່າງ 1 ປີ ຫາ 5 ປີ | 75% |
| • ໄລຍະເວລາທີ່ເຫຼືອຫຼາຍກວ່າ 5 ປີ | 70% |
| (ຈ) ໜັງສືສິນເຊື່ອ (LC) ຫຼື ໜັງສືສິນເຊື່ອແບບສຳຮອງ (SBLC) | 95% |
| (ສ) ໜັງສືຄ້ຳປະກັນ (LG) ຫຼື Bank Guarantee (BG) | 90% |
| (ຊ) ອະສັງຫາລິມະຊັບ | 40% |

ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີທີ່ກ່ຽວຂ້ອງທີ່ອອກໂດຍ ທະນາຄານ ແຫ່ງ ສປປລາວ, ຖ້າຫາກມີການປ່ຽນແປງການຫັກເງິນແຮສຳລັບກິດຈະກຳສິນເຊື່ອ ແມ່ນຕ້ອງບັນທຶກໃນໃບລາຍງານຜົນການດຳເນີນງານ "ລາຍຈ່າຍຈາກການດຳເນີນການອື່ນໆ" ສຳລັບລາຍຈ່າຍເງິນແຮທົ່ວໄປ ແລະ "ລາຍຮັບຈາກການດຳເນີນການອື່ນໆ" ເພື່ອເກັບຄືນລາຍຈ່າຍເງິນແຮທົ່ວໄປ ແລະ ຍອດເຫຼືອຂອງເງິນແຮສຳຮອງທົ່ວໄປທີ່ຈະບັນທຶກໃນໃບສະຫຼຸບຊັບສົມບັດໃນ "ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ" ພາຍໃຕ້ທຶນ ແລະ ຄັງສຳຮອງຂອງທະນາຄານ.

### (ຍ) ການລ້າງໜີ້ສູນ

ອີງຕາມຂໍ້ຕົກລົງ ເລກທີ 512/ທຫລ, ການລ້າງໜີ້ສູນຂອງເງິນໃຫ້ກູ້ຢືມ ຊ້າສຸດບໍ່ໃຫ້ກາຍ 90 ວັນ ຫຼັງຈາກຖືກຈັດຊັ້ນເປັນໜີ້ສູນ.

ການລ້າງໜີ້ສູນ ແມ່ນບັນທຶກເປັນລາຍການນອກໃບສະຫຼຸບຊັບສົມບັດ ເພື່ອຕິດຕາມ ແລະ ເກັບຄືນ. ຈຳນວນທີ່ເກັບຄືນມາໄດ້ ຈາກການລ້າງໜີ້ສູນຂອງເງິນໃຫ້ກູ້ຢືມກ່ອນໜ້າ ເຊິ່ງປະກອບດ້ວຍ: ຂະບວນການໃນການຂາຍຫຼັກຊັບຈາກໜີ້ສູນ ແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

### (ດ) ເງິນແຮ ສຳລັບພາລະຜູກພັນທາງການເງິນນອກໃບສະຫຼຸບຊັບສົມບັດ

ເພື່ອໃຫ້ສອດຄ່ອງກັບ ທຫລ 512, ທະນາຄານບໍ່ຕ້ອງເຮັດການຫັກເງິນແຮ ສຳລັບພາລະຜູກພັນທາງການເງິນນອກໃບສະຫຼຸບຊັບສົມບັດ, ຍົກເວັ້ນແຕ່ຖ້າທະນາຄານ ໄດ້ເຮັດຊຳລະເງິນຕາມສັນຍາຄ້ຳປະກັນແທນລູກຄ້າ, ຊຶ່ງໃນກໍລະນີຊຳລະແມ່ນໃຫ້ຈັດຊັ້ນແລະ ຫັກເງິນແຮ ສຳລັບຂາດທຶນສິນເຊື່ອ ເພື່ອເຮັດໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ທີ່ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 3 (ຊ).

### (ຕ) ຊັບສົມບັດຄົງທີ່

ຊັບສິນຄົງທີ່ລວມມີຊັບສິນຄົງທີ່ມີຕົວຕົນ ແລະ ຊັບສິນຄົງທີ່ບໍ່ມີຕົວຕົນ. ຊັບສິນຄົງທີ່ມີຕົວຕົນປະກອບມີອາຄານ ແລະ ປັບປຸງ, ອຸປະກອນຫ້ອງການ, ພາຫະນະ ແລະ ເຄື່ອງເຟີນີເຈີ ແລະ ເຄື່ອງອູປະກອນ.

ການຊັບສົມບັດຄົງທີ່ມີຕົວຕົນ ແມ່ນບັນທຶກຕາມມູນຄ່າຊື້ລົບໃຫ້ຄ່າຫຼູ້ຍຫ້ຽນສະສົມ ແລະ ຄ່າສູນເສຍມູນຄ່າສະສົມ, ຖ້າມີ. ລາຍຈ່າຍທີ່ກ່ຽວຂ້ອງກັບຊັບສົມບັດຄົງທີ່ ທີ່ຖືກຮັບຮູ້ຈະເພີ່ມເຂົ້າເປັນຕົ້ນທຶນຊັບສິນໄດ້. ສ່ວນຄ່າໃຊ້ຈ່າຍອື່ນໆທີ່ຕາມມາແມ່ນໃຫ້ບັນທຶກເປັນລາຍຈ່າຍໃນໄລຍະທີ່ເກີດຂຶ້ນ.

ເມື່ອມີການຂາຍຊັບສິນ ຫຼື ຈົດອອກສາງ ຕົ້ນທຶນ ແລະ ຄ່າຫຼູ້ຍຫ້ຽນແມ່ນຖືກ ຊຳລະສະສາງ ແລະ ລ້າງອອກຈາກບັນຊີ ຫຼື ຖ້າມີ ກຳໄລ ຫຼື ຂາດທຶນທີ່ເກີດຈາກການໝົດອາຍຸ ຫຼື ສະສາງຊັ້ບສົມບັດ ແລະ ອຸປະກອນອອກແມ່ນ ໃຫ້ບັນທຶກສ່ວນແຕກຕ່າງລະຫວ່າງລາຄາຄາດຄະເນສຸດທິ ແລະ ສ່ວນແຕກຕ່າງດັ່ງກ່າວ ແມ່ນໄດ້ບັນທຶກລົງໃນໃບລາຍງານຜົນໄດ້ຮັບ.

### ການຫັກຄ່າຫຼູ້ຍຫ້ຽນຂອງຊັບສົມບັດຄົງທີ່

ການຄິດໄລ່ຄ່າຫຼູ້ຍຫ້ຽນຂອງຊັບສິນຄົງທີ່ແມ່ນ ແບບສະເໝີຕົວ ຕາມອັດຕາທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍອາກອນລາຍໄດ້ ເລກທີ 67/ສພຊ ລົງວັນທີ 18 ກໍລະກົດ 2019 ຊຶ່ງມີຜົນບັງຄັບໃຊ້ນັບຕັ້ງແຕ່ ຫຼື ພາຍຫຼັງວັນທີ 1 ມັງກອນ 2020 ທີ່ອອກໂດຍປະທານສະພາແຫ່ງຊາດ. ອັດຕາປະຈຳປີທີ່ນຳໃຊ້ ມີດັ່ງລຸ່ມນີ້:

| | |
|---|---|
| ສ່ວນປັບປຸງອາຄານ | 5% |
| ອຸປະກອນຫ້ອງການ | 20% |
| ເຟີນີເຈີ້ ແລະ ເຄື່ອງປະກອບ | 20% |
| ພາຫະນະ | 20% |
| ຊອບແວ | 20% |

### (ຖ) ສັນຍາເຊົ່າ

ເມື່ອເລີ່ມສັນຍາ, ທະນາຄານຕ້ອງພິຈາລະນາສັນຍາ ໂດຍຕ້ອງປະເມີນວ່າເປັນສັນຍາເຊົ່າ ຫຼື ມີສັນຍາເຊົ່າເປັນສ່ວນປະກອບ ຫຼື ບໍ່, ໃນກໍລະນີຖ້າຫາກສັນຍາເປັນການໂອນກຳມະສິດ ໃນການຄວບຄຸມການໃຊ້ຊັບສິນທີ່ລະບຸເປັນໄລຍະເວລາໜຶ່ງເພື່ອແລກກັບການພິຈາລະນາ.
ທະນາຄານຮັບຮູ້ສິດນຳໃຊ້ຊັບສິນຕາມສັນຍາເຊົ່າ ແລະ ໜີ້ສິນຕາມສັນຍາເຊົ່າ ໃນວັນທີ່ເລີ່ມສັນຍາເຊົ່າ, ຍົກເວັ້ນການເຊົ່າໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳຈະຖືກຮັບຮູ້ເປັນລາຍຈ່າຍຕາມຫຼັກການແບບສະໝ່ຳສະເໝີຕະຫຼອດໄລຍະເຊົ່າ.





### (i) ສິດນຳໃຊ້ຊັບສິນຕາມສັນຍາເຊົ່າ

ສິດໃນເວລາເລີ່ມຕົ້ນເຮັດສັນຍາ, ທະນາຄານຈະປະເມີນສັນຍາວ່າເປັນສັນຍາເຊົ່າຊົ່ວຄາວ ຫຼື ສັນຍາເຊົ່າໂອນກຳມະສິດ. ສັນຍາໄດ້ກວມເອົາການນຳໃຊ້ຊັບສິນທີ່ມີຕົວຕົນ; ທະນາຄານມີສິດໃນການນຳເອົາສິດຜົນປະໂຫຍດ ທາງເສດຖະກິດທັງໝົດຈາກການນຳໃຊ້ຊັບສິນໃນລະຫວ່າງທີ່ນຳໃຊ້ຢູ່; ທະນາຄານມີສິດທາງກົງໃນການນຳໃຊ້ຊັບສິນ. ທະນາຄານມີສິດເມື່ອຕ້ອງທຳການຕັດສິນໃຈໃນສິດທີ່ກ່ຽວຂ້ອງທີ່ສຸດຈາກການປ່ຽນແປງວິທີການທີ່ຊັບສິນຈະຖືກເອົາໄປນຳໃຊ້.

ສິດການນຳໃຊ້ຊັບສິນ ແມ່ນຖືກວັດມູນຄ່າຕົ້ນທຶນ ລົບຄ່າຫຼູ້ຍຫ້ຽນສະສົມ ແລະ ຂາດທຶນຈາກການດ້ອຍມູນຄ່າ ແລະ ການດັດແກ້ສຳລັບການວັດມູນຄ່າໃໝ່ຂອງໜີ້ສິນຕາມສັນຍາເຊົ່າ. ມູນຄ່າຕົ້ນທຶນຂອງສິດການນຳໃຊ້ຊັບສິນ ລວມມີມູນຄ່າເດີມຂອງໜີ້ສິນຕາມສັນຍາເຊົ່າທີ່ເກີດຂຶ້ນນະ ຫຼື ກ່ອນວັນເລີ່ມສັນຍາເຊົ່າ, ບວກຕົ້ນທຶນທາງກົງທີ່ເກີດຂຶ້ນ ລວມທັງຄ່າໃຊ້ຈ່າຍທີ່ປະເມີນການບູລະນະ, ຫັກດ້ວຍສິ່ງຈູງໃຈທີ່ໄດ້ຮັບ. ຄ່າຫຼູ້ຍຫ້ຽນແມ່ນຮັບຮູ້ໃນໃບລາຍງານຜົນການດຳເນີນງານ ຕາມຫຼັກການເສັ້ນຊື່ ຕັ້ງແຕ່ມື້ເລີ່ມສັນຍາ ຈົນເຖິງໝົດອາຍຸການໃຊ້ງານ ຫຼື ມື້ສຸດທ້າຍຂອງສັນຍາເຊົ່າ. ອາຍຸການໃຊ້ງານຂອງສິດການນຳໃຊ້ຊັບສິນແມ່ນກຳນົດບົນພື້ນຖານດຽວກັນກັບອາຄານເຊົ່າ ແລະ ອຸປະກອນ.

### (ii) ໜີ້ສິນຕາມສັນຍາເຊົ່າ

ໃນວັນທີເລີ່ມຕົ້ນຂອງສັນຍາເຊົ່າ, ທະນາຄານຈະຄິດໄລ່ໜີ້ສິນຕາມສັນຍາເຊົ່າໃນອັດຕາສະເລ່ຍຂອງຄ່າເຊົ່າພາຍໃນໜຶ່ງປີໃນອັດຕາຄົງທີ່ ເປັນໄລຍະເວລາຊາວປີ. ການຈ່າຍຄ່າເຊົ່າແມ່ນການຈ່າຍແບບຄົງທີ່ (ລວມທັງຄ່າໃຊ້ຈ່າຍຕ່າງໆທີ່ກ່ຽວຂ້ອງ) ຫັກດ້ວຍຄ່າແຮງຈູງໃຈຂອງການເຊົ່າທີ່ໄດ້ຮັບ, ເຊິ່ງວ່າການຈ່າຍຄ່າເຊົ່າແມ່ນຈະມີການປ່ຽນແປງຂຶ້ນກັບດັດສະນີ ຫຼື ອັດຕາ ແລະ ຈຳນວນທີ່ຄາດວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ຍັງເຫລືອ.

ຫຼັງຈາກວັນທີເລີ່ມຕົ້ນ, ຈຳນວນໜີ້ສິນຕາມສັນຍາເຊົ່າແມ່ນຈະເພີ່ມຂຶ້ນ ເພື່ອໃຫ້ສອດຄ່ອງກັບການເພີ່ມຂຶ້ນຂອງດອກເບ້ຍ ແລະ ການຫຼຸດລົງສຳລັບຄ່າເຊົ່າທີ່ຈ່າຍໄປ. ນອກຈາກນັ້ນ, ຍອດໜີ້ສິນທີ່ມີຢູ່ໃນການເຊົ່າແມ່ນຈະຖືກປະເມີນມູນຄ່າໃໝ່ຖ້າມີການແກ້ໄຂ ຫຼື ປ່ຽນແປງໄລຍະເວລາຂອງການເຊົ່າ, ການປ່ຽນແປງຂອງມູນຄ່າເຊົ່າ (ເຊັ່ນ: ການປ່ຽນແປງການຈ່າຍເງິນໃນອະນາຄົດທີ່ເປັນຜົນມາຈາກການປ່ຽນແປງດັດຊະນີ ຫຼື ອັດຕາທີ່ໃຊ້ໃນການກຳນົດດັ່ງກ່າວ) ຫຼື ການປ່ຽນແປງການປະເມີນທາງເລືອກໃນການຊື້ຊັບສິນທີ່ຕິດພັນ.

### ສັນຍາເຊົ່າໄລຍະສັ້ນ ແລະ ສັນຍາເຊົ່າທີ່ມີມູນຄ່າຕ່ຳ - ມູນຄ່າຊັບສິນ

ທະນາຄານນຳໃຊ້ການຍົກເວັ້ນການຮັບຮູ້ສັນຍາເຊົ່າໄລຍະສັ້ນ ຕໍ່ການໃຫ້ເຊົ່າໄລຍະສັ້ນທີ່ມີໄລຍະການເຊົ່າ 12 ເດືອນ ຫຼື ນ້ອຍກວ່າຈາກວັນທີທີ່ເລີ່ມ ແລະ ບໍ່ມີສິດໃນການຊື້ຂາຍ. ນອກນີ້ ຍັງນຳໃຊ້ການເຊົ່າໂດຍການຮັບຮູ້ຊັບສິນທີ່ມີມູນຄ່າຕ່ຳ ກ່ຽວກັບການຍົກເວັ້ນການເຊົ່າຊັບສິນທີ່ຖືວ່າເປັນມູນຄ່າຕ່ຳ. ການຊຳລະຄ່າເຊົ່າໃນການເຊົ່າໄລຍະສັ້ນ ແລະ ການໃຫ້ເຊົ່າຊັບສິນທີ່ມີມູນຄ່າຕ່ຳແມ່ນຖືກຮັບຮູ້ວ່າເປັນຄ່າໃຊ້ຈ່າຍຕາມເສັ້ນຊື່ຕາມໄລຍະການໃຫ້ເຊົ່າ.

### ການພິຈາລະນາທີ່ສຳຄັນໃນການກຳນົດໄລຍະເວລາການເຊົ່າ ແລະ ທາງເລືອກໃນການຕໍ່ສັນຍາ

ທະນາຄານກຳນົດໄລຍະເວລາ ການໃຫ້ເຊົ່າເປັນໄລຍະເວລາທີ່ບໍ່ສາມາດຍົກເລີກໄດ້, ພ້ອມກັບໄລຍະເວລາທີ່ກວມເອົາທາງເລືອກໃນການຂະຫຍາຍອາຍຸສັນຍາ ຖ້າຫາກວ່າເງື່ອນໄຂສົມເຫດສົມຜົນ ທະນາຄານກໍ່ຈະພິຈາລະນານຳໃຊ້ຕໍ່ໄດ້, ຫຼື ໄລຍະເວລາທີ່ກວມເອົາທາງເລືອກໃນການຂະຫຍາຍອາຍຸສັນຍາບໍ່ສົມເຫດສົມຜົນ ທະນາຄານກໍ່ຈະພິຈາລະນາບໍ່ໃຊ້ສິດໃນການຕໍ່.

ທະນາຄານນຳໃຊ້ການຕັດສິນໃນການປະເມີນວ່າ ສົມຄວນທີ່ຈະໃຊ້ທາງເລືອກໃນການຕໍ່ອາຍຸ ຫຼື ບໍ່ນັ້ນ, ຂຶ້ນກັບປັດໃຈທີ່ກ່ຽວຂ້ອງທີ່ສ້າງແຮງຈູງໃຈທາງດ້ານເສດຖະກິດໃຫ້ມີການໃຊ້ການຕໍ່ອາຍຸ. ພາຍຫລັງວັນທີເລີ່ມຕົ້ນເຊົ່າ ທະນາຄານຈະປະເມີນການໃຫ້ເຊົ່າຄືນອີກຖ້າມີເຫດການ ຫຼື ການປ່ຽນແປງທີ່ສຳຄັນໃນສະຖານະການທາງເສດຖະກິດ ທາງເລືອກທີ່ຈະຕໍ່ໃຫມ່ (ເຊັ່ນ: ການປ່ຽນແປງໃນຍຸດທະສາດທຸລະກິດ). ທະນາຄານໄດ້ກວມເອົາໄລຍະການຕໍ່ອາຍຸເປັນສ່ວນຫນຶ່ງຂອງໄລຍະເວລາການໃຫ້ເຊົ່າສຳລັບການເຊົ່າສະຖານທີ່ ແລະ ອຸປະກອນທີ່ກ່ຽວກັບເຕັກໂນໂລຊີ ເນື່ອງຈາກອຸປະກອນເຫຼົ່ານີ້ເປັນຊັບສິນທີ່ໃຊ້ເຂົ້າໃນການດຳເນີນງານຂອງຕົນ.

### (ທ) ເງິນຝາກຂອງລູກຄ້າ

ເງິນຝາກແມ່ນໄດ້ບັນທຶກຕາມມູນຄ່າຕົວຈິງ.

### (ນ) ການຮັບຮູ້ລາຍຮັບ

ລາຍຮັບດອກເບ້ຍແມ່ນຮັບຮູ້ຕາມຫຼັກການຄ້າງຮັບຄ້າງຈ່າຍ, ຍົກເວັ້ນກໍລະນີທີ່ບັນຊີດັ່ງກ່າວໄດ້ກາຍເປັນບັນຊີທີ່ບໍ່ເກີດດອກອອກຜົນ. ເມື່ອບັນຊີດັ່ງກ່າວກາຍມາເປັນບັນຊີທີ່ບໍ່ເກີດດອກອອກຜົນ, ການບັນທຶກດອກເບ້ຍມາເປັນລາຍຮັບ ແມ່ນໃຫ້ພັກໄວ້ຈົນກວ່າຈະມີການຮັບຮູ້ເງິນສົດ. ບັນຊີຂອງລູກຄ້າທີ່ຖືກພິຈາລະນາເປັນບັນຊີ ທີ່ບໍ່ເກີດດອກອອກຜົນແມ່ນເມື່ອບໍ່ມີການຊຳລະເງິນຕົ້ນເກີນກຳນົດສາມເດືອນ. ອີງຕາມກົດລະບຽບຂອງ ທຫລ.

ລາຍຮັບຈາກການໃຫ້ບໍລິການຕ່າງໆຂອງທະນາຄານ ແມ່ນໄດ້ຕັ້ງຄ້າງຮັບຕາມມາດຕະຖານດັ່ງລຸ່ມນີ້:

(i) ຄ່າບໍລິການ ແລະ ຄ່າທຳນຽມສິນເຊື່ອພ້ອມທັງສິ່ງອຳນວຍຄວາມສະດວກອື່ນໆ ທີ່ໃຫ້ບໍລິການແກ່ລູກຄ້າແມ່ນຮັບຮູ້ເມື່ອມີການເຄື່ອນໄຫວດັ່ງກ່າວ;
(ii) ຄ່າທຳນຽມ ຂໍ້ຜູກມັດ ແລະ ຄ່າຮັບປະກັນ ພ້ອມກັບສິ່ງອຳນວຍຄວາມສະດວກອື່ນໆ ທີ່ໃຫ້ບໍລິການແກ່ລູກຄ້າແມ່ນຮັບຮູ້ເມື່ອມີການເຄື່ອນໄຫວດັ່ງກ່າວ; ແລະ
(iii) ການເກັບຄ່າບໍລິການ ແລະ ຄ່າທຳນຽມ ໃນການດຳເນີນການ ແມ່ນໄດ້ຮັບຮູ້ເມື່ອການເຄື່ອນໄຫວດັ່ງກ່າວເກີດຂຶ້ນ.

### (ບ) ລາຍຈ່າຍດອກເບ້ຍ

ລາຍຈ່າຍດອກເບ້ຍ ເງິນຝາກຂອງລູກຄ້າ ແລະ ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ (ໜີ້ສິນ) ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບຕາມຫຼັກການຄ້າງຮັບຄ້າງຈ່າຍ.

### (ປ) ອາກອນກຳໄລ

ລາຍຈ່າຍອາກອນລາຍໄດ້ພາຍໃນປີ ປະກອບດ້ວຍອາກອນທີ່ຕ້ອງຈ່າຍໃນປະຈຸບັນ ແລະ ອາກອນເຍື້ອນຊຳລະທີ່ຖືກ ຮັບຮູ້ໃນກຳໄລ ຫຼື ຂາດທຶນ ຍົກເວັ້ນບາງລາຍການທີ່ກ່ຽວຂ້ອງ ໂດຍກົງກັບທຶນ ຫຼື ໃນໃບລາຍງານຜົນໄດ້ຮັບ ສັງລວມອື່ນໆ.

ອາກອນ ໃນປະຈຸບັນ

ອາກອນ ໃນປະຈຸບັນ ແມ່ນອາກອນທີ່ຄາດວ່າຈະໄດ້ຈ່າຍ ຫຼື ໄດ້ຮັບ ຂອງອາກອນກຳໄລ ຫຼື ຂາດທຶນໃນປີ. ອັດຕາ ອາກອນທີ່ໃຊ້ ຫຼື ບັງຄັບໃຊ້ ໃນວັນທີ່ລາຍງານ. ແລະ ລາຍການປັບປຸງອາກອນທີ່ຈະໄດ້ຈ່າຍໄປໃນປີຜ່ານມາ.

ໄລຍະການປະເມີນຈັດການບໍລິຫານ ສິ່ງຄືນອາກອນ ເມື່ອເຫັນວ່າມີເຫດການໃດໜຶ່ງທີ່ກ່ຽວຂ້ອງທາງດ້ານອາກອນ ທີ່ເໝາະສົມກັບກົດລະບຽບ ແມ່ນຕ້ອງໄດ້ຮັບການຕີຄວາມໝາຍ ແລະ ກຳນົດຈຳນວນການຊຳລະ ອາກອນໃຫ້ແກ່ ເຈົ້າໜ້າທີ່ສ່ວຍສາອາກອນ.

ອີງຕາມກົດໝາຍສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງຕ່າງປະເທດໃນ ສປປ ລາວ ເລກທີ 01/94 ລົງວັນທີ 14 ມີນາ 1994. ອັດຕາອາກອນທີ່ໃຊ້ສຳລັບສະຖາບັນຕ່າງປະເທດແມ່ນ 20% ຂອງກຳໄລທີ່ຖືກອາກອນຂອງທະນາຄານ ທີ່ລາຍງານພາຍໃຕ້ຫຼັກການທາງບັນຊີ ທີ່ຮອງຮັບກັນໂດຍທົ່ວໄປຂອງ ສປປ ລາວ.

ອາກອນເຍື້ອນຊຳລະ

ອາກອນເຍື້ອນຊຳລະ ຖືກຮັບຮູ້ໂດຍສ່ວນຕ່າງຊົ່ວຄາວລະຫວ່າງ ຍອດຍົກມາຂອງຊັບສິນ ແລະ ໜີ້ສິນ ສຳລັບຈຸດ ປະສົງຂອງການລາຍງານທາງການເງິນ ແລະ ຈຳນວນເງິນທີ່ຖືກໃຊ້ສຳລັບການໄລ່ອາກອນ. ອາກອນເຍື້ອນຊຳລະບໍ່ໄດ້ຮັບຮູ້ສຳລັບສ່ວນຕ່າງຊົ່ວຄາວ ໃນການຮັບຮູ້ເລີ່ມຕົ້ນຂອງລາຍການຊັບສິນ ຫຼື ໜີ້ສິນທີ່ບໍ່ໄດ້ເປັນການລວມ ທຸລະກິດ ແລະ ບໍ່ມີຜົນຕໍ່ກັບບັນຊີ ຫຼື ການຄິດໄລ່ອາກອນ ກຳໄລ ຫຼື ຂາດທຶນ.

ອາກອນເຍື້ອນຊຳລະທາງຊັບສິນ ຖືກຮັບຮູ້ໃນແບບຂອງອາກອນຂາດທຶນ. ອາກອນສິນເຊື່ອ ແລະ ຄວາມແຕກຕ່າງ ຊົ່ວຄາວທີ່ບໍ່ໄດ້ນຳໃຊ້ ເມື່ອມີຄວາມເປັນໄປໄດ້ວ່າອາກອນກຳໄລທີ່ເສຍໃນອະນາຄົດຈະສາມາດນຳມາໃຊ້ຫັກໄດ້. ອາກອນເຍື້ອນຊຳລະຊັບສິນຈະຖືກກວດຄືນໃນແຕ່ລະມື້ລາຍງານ ແລະ ຈະຖືກຫຼຸດລົງເມື່ອບໍ່ມີຄວາມເປັນໄປໄດ້ວ່າ ຜົນປະໂຫຍດຂອງອາກອນທີ່ກ່ຽວຂ້ອງນັ້ນຈະສາມາດຮັບຮູ້ໄດ້.

ຊັບສິນຂອງອາກອນເຍື້ອນຊຳລະທີ່ບໍ່ຖືກຮັບຮູ້ຖືກປະເມີນຄືນໃນແຕ່ລະມື້ລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າອາກອນກຳໄລທີ່ຈະເສຍໃນອະນາຄົດ ແລະ ຈະສາມາດນຳມາໃຊ້ຫັກໄດ້.

ອາກອນເຍື້ອນຊຳລະແມ່ນຖືກວັດແທກຕາມອັດຕາອາກອນທີ່ຄາດວ່າຈະຖືກນຳໃຊ້ກັບຄວາມແຕກຕ່າງເມື່ອເກີດມີການໄດ້ກັບຄືນ,ໂດຍໃຊ້ອັດຕາອາກອນ ຫຼື ມີຜົນປະກາດໃຊ້ໃນມື້ທີ່ມີການລາຍງານ.

ການວັດແທກມູນຄ່າອາກອນເຍື້ອນຊຳລະສະທ້ອນໃຫ້ເຫັນຜົນກະທົບທາງດ້ານອາກອນທີ່ຈະເປັນໄປຕາມຮູບແບບທີ່ທະນາຄານຄາດຫວັງໃນບົດລາຍງານທ້າຍປີເພື່ອກູ້ຄືນ, ຫຼື ຊຳລະໜີ້ສິນທີ່ຍັງເຫຼືອຂອງຊັບສິນ ແລະ ໜີ້ສິນ.

ການເປີດເຜີຍທາງອາກອນ

ການຄືນອາກອນຂອງທະນາຄານອາດຖືກກວດສອບ ໂດຍເຈົ້າໜ້າທີ່ສ່ວຍສາອາກອນຍ້ອນການນຳໃຊ້ກົດລະບຽບ ແລະ ລະບຽບການອາກອນໃນແຕ່ລະກິດຈະກຳທີ່ຖືກຕີຄວາມໝາຍແຕກຕ່າງກັນຈຳນວນອາກອນກຳໄລທີ່ຖືກລາຍງານໃນບົດລາຍງານຖານະການເງິນອາດຈະມີການປ່ຽນແປງພາຍຫຼັງການພິຈາລະນາຂອງເຈົ້າໜ້າທີ່ສ່ວຍສາອາກອນ.



## ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)
ສຳລັບປີການບັນຊີສິ້ນສຸດ 31 ທັນວາ 2025

### (ຜ) ເງິນແຮ

ການຫັກເງິນແຮຈະຖືກຮັບຮູ້ ຖ້າມີຜົນມາຈາກເຫດການທີ່ເກີດຂຶ້ນໃນອະດີດ, ທະນາຄານມີພັນທະຕາມກົດໝາຍ ຫຼື ພາລະຜູກພັນ ໃນປະຈຸບັນ ຊຶ່ງສາມາດຄາດປະມານໄດ້ຢ່າງໜ້າເຊື່ອຖື ແລະ ມີຄວາມເປັນໄປໄດ້ຂ້ອນຂ້າງແນ່ນອນ ທີ່ທະນາຄານ ຈະຕ້ອງຈ່າຍຜົນຕອບແທນທີ່ເປັນເງິນ ເພື່ອຊຳລະພາລະຜູກພັນດັ່ງກ່າວ. ການຫັກເງິນແຮຈະພິຈາລະນາຈາກ ສ່ວນຫຼຸດກະແສເງິນສົດໃນອະນາຄົດ ໂດຍໃຊ້ອັດຕາຄິດໄລ່ກ່ອນຫັກອາກອນ ຊຶ່ງສະທ້ອນການປະເມີນຄວາມສ່ຽງ ຂອງຕະຫຼາດໃນປະຈຸບັນ ຂອງມູນຄ່າຕາມເວລາຂອງເງິນ ແລະ ຄວາມສ່ຽງສະເພາະຂອງໜີ້ສິນ.

### (ຝ) ພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນທີ່ກ່ຽວຂ້ອງ ແມ່ນພິຈາລະນາຈາກຄວາມກ່ຽວຂ້ອງກັບທະນາຄານ ຖ້າພາກສ່ວນໜຶ່ງທີ່ມີຄວາມສາມາດທາງກົງ ຫຼື ທາງອ້ອມ ທີ່ຈະຄວບຄຸມພາກສ່ວນອື່ນ ຫຼື ມີອຳນາດທີ່ພົ້ນເດັ່ນ ຕໍ່ກັບພາກສ່ວນອື່ນທີ່ກ່ຽວຂ້ອງກັນກັບ ການຕັດສິນໃຈກ່ຽວກັບການເງິນ ແລະ ການດຳເນີນງານ ຫຼື ທະນາຄານພ້ອມກັບພາກສ່ວນດັ່ງກ່າວ ມີການຄວບຄຸມຮ່ວມກັນ ຫຼື ມີອຳນາດທີ່ພົ້ນເດັ່ນ, ພາກສ່ວນທີ່ກ່ຽວຂ້ອງ ອາດເປັນບຸກຄົນ ຫຼື ບໍລິສັດ ແລະ ລວມທັງ ສະມາຊິກໃນຄອບຄົວຂອງບຸກຄົນໃດໜຶ່ງທີ່ເປັນພາກສ່ວນທີ່ກ່ຽວຂ້ອງ.

### (ພ) ຜົນປະໂຫຍດຂອງພະນັກງານ

ຜົນປະໂຫຍດການເຮັດວຽກ

ຜົນປະໂຫຍດໃນການເຮັດວຽກແມ່ນ ທະນາຄານມີການຈ່າຍເງິນເບ້ຍບຳນານ ໃຫ້ກັບພະນັກງານທີ່ອອກກິນເງິນເບ້ຍບຳນານຂອງທະນາຄານ ໂດຍພະແນກກອງທຶນປະກັນສັງຄົມ ເຊິ່ງເປັນຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ທະນາຄານຕ້ອງສົມທົບເງິນ ຜົນປະໂຫຍດໃນການເຮັດວຽກ ໂດຍການຈ່າຍເງິນປະກັນສັງຄົມໃຫ້ແກ່ຫນ່ວຍປະກັນໄພສັງຄົມ ໃນອັດຕາ 6% ຂອງຄ່າຈ້າງພື້ນຖານຂອງພະນັກງານໃນແຕ່ລະເດືອນ. ທະນາຄານບໍ່ມີພັນທະເພີ່ມເຕີມກ່ຽວກັບຜົນປະໂຫຍດໃນການເຮັດວຽກ ສຳລັບພະນັກງານນອກຈາກນີ້.

ຜົນປະໂຫຍດການສິ້ນສຸດການເປັນພະນັກງານ

ອີງຕາມມາດຕາ 82 ຂອງກົດຫມາຍວ່າດ້ວຍແຮງງານສະບັບປັບປຸງເລກທີ 43/ສພຊ ທີ່ໄດ້ຮັບອະນຸມັດຈາກປະທານປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວໃນວັນທີ 28 ມັງກອນ 2014, ທະນາຄານມີພັນທະທີ່ຈະຈ່າຍຄ່າບຳລຸງລ້ຽງໃຫ້ແກ່ພະນັກງານທີ່ຖືກຍົກເລີກໂດຍການຖືກໄລ່ອອກໃນກໍລະນີດັ່ງນີ້:

- ພະນັກງານຂາດຄວາມຊຳນານພິເສດ ຫຼື ບໍ່ມີສຸຂະພາບດີ ດັ່ງນັ້ນຈຶ່ງບໍ່ສາມາດເຮັດວຽກຕໍ່ໆໄປໄດ້;
- ນາຍຈ້າງເຫັນວ່າຈຳເປັນຕ້ອງຫລຸດຈຳນວນພະນັກງານເພື່ອປັບປຸງວຽກງານພາຍໃນຫນ່ວຍແຮງງານ.

ສຳລັບການຍົກເລີກສັນຍາການຈ້າງດ້ວຍເຫດຜົນໃດຫນຶ່ງທີ່ກ່າວມາຂ້າງເທິງ ນາຍຈ້າງຕ້ອງຈ່າຍຄ່າບຳລຸງການເຊົາເຮັດວຽກເຊິ່ງຄິດໄລ່ໂດຍອີງໃສ່ 10% ຂອງຄ່າຈ້າງ ຫຼື ຄ່າຈ້າງຄັ້ງສຸດທ້າຍ ຄູນກັບຈຳນວນເດືອນທີ່ເຮັດວຽກທັງຫມົດ. ນັບຕັ້ງແຕ່ວັນທີ 31 ທັນວາ 2025 ທະນາຄານຍັງບໍ່ທັນວາງແຜນທີ່ຈະປົດພະນັກງານຄົນໃດໃນກໍລະນີຂ້າງເທິງນັ້ນ; ດັ່ງນັ້ນ ທະນາຄານຈຶ່ງບໍ່ໄດ້ຕັ້ງການສຳຮອງເງິນແຮສຳລັບເງິນອຸດໜູນການຢຸດຕິການດຳເນີນງານລົງໃນເອກະສານລາຍງານການເງິນ.

## 4 ເງິນສົດ

| | 2025 ລ້ານກີບ | 2024 ລ້ານກີບ |
|---|---:|---:|
| ເງິນກີບລາວ (“ກີບ”) | 6,935 | 10,988 |
| ເງິນຕາຕ່າງປະເທດອື່ນໆ | 16,077 | 15,632 |
| **ລວມ** | **23,012** | **26,620** |

### 5 ໜີ້ຕ້ອງຮັບຈາກທະນາຄານ ແລະ ສະຖາບັນການເງິນອື່ນ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | | |
| **ເງິນຝາກກະແສລາຍວັນຢູ່ທະນາຄານພາຍໃນປະເທດ** | | |
| ທະນາຄານ ພັດທະນາລາວ | 211 | 270 |
| ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ | 957 | 77 |
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ສາຂາ ນະຄອນຫຼວງວຽງຈັນ | 27 | 27 |
| | **1,195** | 374 |
| **ເງິນຝາກກະແສລາຍວັນຢູ່ທະນາຄານຕ່າງປະເທດ** | | |
| ທະນາຄານ ຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ | 365,319 | 255,288 |
| ທະນາຄານ ຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ - ສາຂາ Nhanh Nghe | 6,482 | - |
| ທະນາຄານ ຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ - ສາຂາ Kon Tum | 5,023 | - |
| ທະນາຄານ ໄຊງ່ອນເທືອງຕິ່ນ ກຳປູເຈຍ ມະຫາຊົນ | 3 | 3 |
| ທະນາຄານ ຫຸ້ນສ່ວນການຄ້າທະຫານ ສາຂາກຳປູເຈຍ | 2 | 2 |
| | **376,829** | **255,293** |
| **ເງິນຝາກມີກຳນົດ** | | |
| **ເງິນຝາກມີກຳນົດຢູ່ທະນາຄານພາຍໃນປະເທດ** | | |
| ທະນາຄານ ໄຊງ່ອນ-ຮ່າໂນ້ຍ ລາວ ຈຳກັດ | 64,383 | 64,686 |
| ທະນາຄານ ຮ່ວມພັດທະນາ | 37,443 | 53,068 |
| ທະນາຄານ ລາວຈີນ ຈຳກັດ | - | 64,686 |
| ທະນາຄານ ພັດທະນາລາວ | 56,538 | 64,686 |
| ທະນາຄານ ຫຸ້ນສ່ວນການຄ້າທະຫານ | 42,922 | - |
| ທະນາຄານ ສົ່ງເສີມກະສິກຳ ຈຳກັດ | 64,383 | 43,124 |
| ທະນາຄານ ການຄ້າຕ່າງປະເທດຫວຽດນາມ ປະຈຳລາວ | 21,461 | - |
| | **287,130** | **290,250** |
| | **665,154** | **545,917** |

### 6 ເງິນຝາກຕາມລະບຽບການຢູ່ທະນາຄານແຫ່ງ ສປປ ລາວ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ເງິນຝາກຕາມລະບຽບການ: | | |
| ເງິນຝາກບໍ່ມີກຳນົດ | 166,779 | 229,154 |
| ເງິນຝາກແຮບັງຄັບ | 32,904 | 39,563 |
| ເງິນຝາກທຶນຈົດທະບຽນ | 5 | 5 |
| **ລວມ** | **199,688** | **268,722** |

ເງິນຝາກຢູ່ທະນາຄານແຫ່ງສປປ ລາວ ປະກອບມີ ບັນຊີຊຳລະສະສາງ, ເງິນແຮຝາກບັງຄັບ, ເງິນຝາກທຶນຈົດທະບຽນ, ເງິນຝາກເຫຼົ່ານີ້ແມ່ນບໍ່ມີດອກເບ້ຍ.

ເງິນຝາກຕາມລະບຽບການຢູ່ທະນາຄານກາງ ລວມມີ ເງິນແຮຝາກບັງຄັບ ແລະ ເງິນຝາກທຶນຈົດທະບຽນ. ເງິນຝາກເຫຼົ່ານີ້ແມ່ນບໍ່ມີດອກເບ້ຍ.

ພາຍໃຕ້ກົດລະບຽບຂອງທະນາຄານແຫ່ງ ສປປ ລາວ, ທະນາຄານຕ້ອງຮັກສາເງິນສົດໄວ້ກັບ ທະນາຄານແຫ່ງ ສປປ ລາວ ໃນປະເພດເງິນແຮຝາກບັງຄັບໃນອັດຕາ 8% ສຳລັບສະກຸນເງິນກີບ ແລະ 11% ສຳລັບສະກຸນເງິນຕາຕ່າງປະເທດ (2024: 8% ແລະ 11%), ໃນ 2 ຄັ້ງຕໍ່ເດືອນ ຂອງເງິນຝາກລູກຄ້າ ທີ່ມີໄລຍະກຳນົດຕ່ຳກວ່າ 12 ເດືອນ. ໃນລະຫວ່າງປີ, ທະນາຄານຈະຕ້ອງໄດ້ຮັກສາເງິນແຮຝາກບັງຄັບຕາມທີ່ ທະນາຄານແຫ່ງ ສປປ ລາວ ວາງອອກ.





### 7 ເງິນລົງທຶນ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| **ຫຼັກຊັບທີ່ຖືຄອງຈົນຮອດມື້ຄົບກຳນົດ** | | |
| ພັນທະບັດຂອງລັດຖະບານ | **6,870** | **8,016** |

ພັນທະບັດຂອງລັດຖະບານ ມີໄລຍະເວລາ 5 ປີ ຫາ 10 ປີ ແລະ ອັດຕາດອກເບ້ຍ 5.20% ເຖິງ 6% ຕໍ່ປີ.

### 8 ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ເງິນກູ້ໃຫ້ລູກຄ້າ: | 1,518,829 | 1,560,923 |
| ຫັກລົບ: ເງິນແຮສະເພາະ | (3,762) | (9,537) |
| ໃນນັ້ນມີ: | | |
| ໜີ້ຄວນເອົາໃຈໃສ່ | (108) | (442) |
| ໜີ້ທີ່ບໍ່ເກີດດອກອອກຜົນ | (3,654) | (9,095) |
| | **1,515,067** | **1,551,386** |

#### ກ ແຍກຕາມໄລຍະເວລາເງິນກູ້

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ໄລຍະສັ້ນ | 488,495 | 524,686 |
| ໄລຍະກາງ | 461,607 | 442,129 |
| ໄລຍະຍາວ | 568,727 | 594,108 |
| **ລວມ** | **1,518,829** | **1,560,923** |

#### ຂ ແຍກຕາມສະກຸນເງິນ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ກີບ | 1,238,484 | 1,242,702 |
| ໂດລາສະຫະລັດ | 276,244 | 314,080 |
| ບາດ | 4,101 | 4,141 |
| **ລວມ** | **1,518,829** | **1,560,923** |

#### ຄ ແຍກຕາມປະເພດຂະແໜງເສດຖະກິດ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ການຄ້າ | 391,528 | 416,674 |
| ກະສິກຳ ແລະ ປ່າໄມ້ | 296,094 | 342,065 |
| ການບໍລິການ | 212,049 | 200,764 |
| ອຸດສາຫະກຳ | 95,627 | 46,668 |
| ການກໍ່ສ້າງ | 13,822 | 22,759 |
| ຂະແໜງການອື່ນໆ | 509,709 | 531,993 |
| **ລວມ** | **1,518,829** | **1,560,923** |

## ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)

ສຳລັບປີການບັນຊີສິ້ນສຸດ 31 ທັນວາ 2024

### ງ ແຍກຕາມອັດຕາດອກເບ້ຍ (ຕໍ່ປີ)

| | 2025 (%) | 2024 (%) |
|---|---|---|
| ເງິນກູ້ ສະກຸນເງິນ ກີບ | 3.00-15.20 | 3.00-15.00 |
| ເງິນກູ້ ສະກຸນເງິນ ໂດລາສະຫະລັດ | 6.00-8.24 | 6.00-9.00 |
| ເງິນກູ້ ສະກຸນເງິນ ບາດ | 6.50-10.00 | 6.50-10.00 |

### ຈ ແຍກຕາມຜົນການດຳເນີນງານສິນເຊື່ອ

| | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|
| ການດຳເນີນງານສິນເຊື່ອ: | | |
| ສິນເຊື່ອປົກກະຕິ | 1,489,046 | 1,525,539 |
| ສິນເຊື່ອຄວນເອົາໃຈໃສ່ | 3,599 | 4,447 |
| ໜີ້ທີ່ບໍ່ເກີດດອກອອກຜົນ: | | |
| ໜີ້ຕໍ່າກວ່າມາດຕະຖານ | 2,885 | 327 |
| ໜີ້ຕ້ອງຮັບທວງຍາກ | 4,447 | 542 |
| ໜີ້ສູນ | 18,852 | 30,068 |
| **ລວມ** | **1,518,829** | **1,560,923** |

### ສ ເງິນແຮສະເພາະ ແລະ ເງິນແຮທົ່ວໄປ

ການເຄື່ອນໄຫວສຳລັບເງິນແຮສະເພາະຂອງທະນາຄານໃນລະຫວ່າງປີ 2025 ມີດັ່ງຕໍ່ໄປນີ້:

| | ເງິນແຮສະເພາະ | | | |
|---|---|---|---|---|
| | ໜີ້ທີ່ບໍ່ເກີດດອກອອກຜົນ ລ້ານກີບ | ໜີ້ຄວນເອົາໃຈໃສ່ ລ້ານກີບ | ເງິນແຮທົ່ວໄປ ລ້ານກີບ | ລວມ ລ້ານກີບ |
| **ຍອດເຫຼືອນະວັນທີ 1 ມັງກອນ 2025** | **9,405** | **132** | **7,628** | **17,165** |
| ເງິນແຮສຸດທິ/ (ເກັບຄືນ) ພາຍໃນປີ | (5,750) | (25) | (177) | (5,952) |
| ສ່ວນຕ່າງຈາກອັດຕາແລກປ່ຽນ | - | - | (6) | (6) |
| **ຍອດເຫຼືອນະວັນທີ 31 ທັນວາ 2025** | **3,655** | **107** | **7,445** | **11,207** |

ການເຄື່ອນໄຫວສຳລັບເງິນແຮສະເພາະຂອງທະນາຄານໃນລະຫວ່າງປີ 2024 ມີດັ່ງຕໍ່ໄປນີ້:

| | ເງິນແຮສະເພາະ | | | |
|---|---|---|---|---|
| | ໜີ້ທີ່ບໍ່ເກີດດອກອອກຜົນ ລ້ານກີບ | ໜີ້ຄວນເອົາໃຈໃສ່ ລ້ານກີບ | ເງິນແຮທົ່ວໄປ ລ້ານກີບ | ລວມ ລ້ານກີບ |
| **ຍອດເຫຼືອນະວັນທີ 1 ມັງກອນ 2024** | **8,748** | **149** | **5,874** | **14,771** |
| ເງິນແຮສຸດທິ/ (ເກັບຄືນ) ພາຍໃນປີ | 348 | (17) | 1,997 | 2,328 |
| ສ່ວນຕ່າງຈາກອັດຕາແລກປ່ຽນ | 309 | - | (243) | 66 |
| **ຍອດເຫຼືອນະວັນທີ 31 ທັນວາ 2024** | **9,405** | **132** | **7,628** | **17,165** |



## ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)

ສຳລັບປີການບັນຊີສິ້ນສຸດ 31 ທັນວາ 2025

### 9 ຊັບສົມບັດຄົງທີ່

| | ບົດອະທິບາຍ | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|---|
| ຊັບສິນກຳລັງກໍ່ສ້າງ | | 295 | 295 |
| ຊັບສົມບັດຄົງທີ່ມີຕົວຕົນ | 9.1 | 50,523 | 60,177 |
| ຊັບສົມບັດຄົງທີ່ບໍ່ມີຕົວຕົນ | 9.2 | 22,084 | 23,928 |
| ສິດໃນການນຳໃຊ້ຊັບສິນ | 9.3 | 1,824 | 3,482 |
| | | **74,726** | **87,882** |

### 9.1 ຊັບສົມບັດຄົງທີ່ມີຕົວຕົນ, ສຸດທິ

| | ອາຄານ ລ້ານກີບ | ອຸປະກອນຫ້ອງການ ລ້ານກີບ | ພາຫະນະ ລ້ານກີບ | ຊັບສົມບັດຄົງທີ່ມີຕົວຕົນອື່ນໆ ລ້ານກີບ | ລວມ (ລ້ານກີບ) |
|---|---|---|---|---|---|
| **ຕົ້ນທຶນ** | | | | | |
| **ນະວັນທີ 1 ມັງກອນ 2024** | **116,972** | **44,976** | **5,139** | **1,685** | **168,772** |
| ຮັບເຂົ້າເພີ່ມ | - | 1,769 | 1,699 | - | 3,468 |
| **ນະວັນທີ 31 ທັນວາ 2024 ແລະ 1 ມັງກອນ 2025** | **116,972** | **46,745** | **6,838** | **1,685** | **172,240** |
| ຮັບເຂົ້າເພີ່ມ | - | 706 | 1,728 | - | 2,434 |
| ລຶບລ້າງອອກ | - | (3,356) | (734) | (326) | (4,416) |
| **ນະວັນທີ 31 ທັນວາ 2025** | **116,972** | **44,095** | **7,832** | **1,359** | **170,258** |
| **ຄ່າຫຼຸ້ຍຫ້ຽນສະສົມ** | | | | | |
| **ນະວັນທີ 1 ມັງກອນ 2024** | **67,730** | **27,982** | **3,394** | **1,549** | **100,655** |
| ຄ່າຫຼຸ້ຍຫ້ຽນໃນປີ | 5,946 | 4,909 | 502 | 51 | 11,408 |
| **ນະວັນທີ 31 ທັນວາ 2024 ແລະ 1 ມັງກອນ 2025** | **73,676** | **32,891** | **3,896** | **1,600** | **112,063** |
| ຄ່າຫຼຸ້ຍຫ້ຽນໃນປີ | 5,930 | 4,948 | 1,178 | 32 | 12,088 |
| ລຶບລ້າງອອກ | - | (3,356) | (734) | (326) | (4,416) |
| **ນະວັນທີ 31 ທັນວາ 2025** | **79,606** | **34,483** | **4,340** | **1,306** | **119,735** |
| **ຍອດເຫຼືອສຸດທິ** | | | | | |
| **ນະວັນທີ 1 ມັງກອນ 2025** | **43,296** | **13,854** | **2,942** | **85** | **60,177** |
| **ນະວັນທີ 31 ທັນວາ 2025** | **37,366** | **9,612** | **3,492** | **53** | **50,523** |

## 9.2 ຊັບສິນບັດຄົງທີ່ບໍ່ມີຕົວຕົນ

| | ສິດນຳໃຊ້ທີ່ດິນ ລ້ານກີບ | ຊອບແວ ລ້ານກີບ | ລວມ ລ້ານກີບ |
|---|---|---|---|
| **ຕົ້ນທຶນ** | | | |
| **ນະວັນທີ 1 ມັງກອນ 2024** | **15,855** | **15,567** | **31,422** |
| ຮັບເຂົ້າເພີ່ມ | - | 2,184 | 2,184 |
| **ນະວັນທີ 1 ມັງກອນ 2025** | **15,855** | **17,751** | **33,606** |
| ຮັບເຂົ້າເພີ່ມ | - | 627 | 627 |
| **ນະວັນທີ 31 ທັນວາ 2025** | **15,855** | **18,378** | **34,233** |
| **ຄ່າຫຼຸ້ຍຫ້ຽນສະສົມ** | | | |
| **ນະວັນທີ 1 ມັງກອນ 2024** | **-** | **7,489** | **7,489** |
| ຄ່າຫຼຸ້ຍຫ້ຽນໃນປີ | - | 2,189 | 2,189 |
| **ນະວັນທີ 1 ມັງກອນ 2025** | - | **9,678** | **9,678** |
| ຄ່າຫຼຸ້ຍຫ້ຽນໃນປີ | - | 2,471 | 2,471 |
| **ນະວັນທີ 31 ທັນວາ 2025** | - | **12,149** | **12,149** |
| **ຍອດເຫຼືອສຸດທິ** | | | |
| **ນະວັນທີ 31 ທັນວາ 2024** | **15,855** | **8,073** | **23,928** |
| **ນະວັນທີ 31 ທັນວາ 2025** | **15,855** | **6,229** | **22,084** |

## 9.3 (ກ) ສິດໃນການນຳໃຊ້ຊັບສິນ

| | ລ້ານກີບ |
|---|---|
| **ຕົ້ນທຶນ** | |
| **ນະວັນທີ 31 ທັນວາ 2023** | **7,711** |
| ຮັບເຂົ້າເພີ່ມ | - |
| **ນະວັນທີ 31 ທັນວາ 2024** | **7,711** |
| ຮັບເຂົ້າເພີ່ມ | - |
| ຕັດບັນຊີໃນປີ | (2,296) |
| **ນະວັນທີ 31 ທັນວາ 2025** | **5,415** |
| **ຄ່າຫຼຸ້ຍຫ້ຽນສະສົມ** | |
| **ນະວັນທີ 31 ທັນວາ 2023** | **3,173** |
| ຄ່າຫຼຸ້ຍຫ້ຽນໃນປີ | 1,055 |
| **ນະວັນທີ 31 ທັນວາ 2024** | **4,229** |
| ຄ່າຫຼຸ້ຍຫ້ຽນໃນປີ | 920 |
| ຕັດບັນຊີໃນປີ | (1,558) |
| **ນະວັນທີ 31 ທັນວາ 2025** | **3,591** |
| **ຍອດເຫຼືອສຸດທິ** | |
| **ນະວັນທີ 31 ທັນວາ 2024** | **3,482** |
| **ນະວັນທີ 31 ທັນວາ 2025** | **1,824** |

### (ຂ) ຍອດທີ່ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ

| | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|
| ລາຍຈ່າຍຄ່າຫຼູ້ຍຫ້ຽນ | 920 | 1,055 |





## 10 ຊັບສິນອື່ນໆ

| | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|
| ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | 12,777 | 11,875 |
| ດອກເບ້ຍຈ່າຍລ່ວງຫນ້າໃຫ້ລູກຄ້າເງິນຝາກ | 10,811 | 6,483 |
| ລາຍຈ່າຍຈ່າຍລ່ວງໜ້າ | 11,713 | 12,144 |
| ລາຍຈ່າຍລ່ວງໜ້າໃຫ້ຜູ້ສະໜອງ | 1,070 | 9,371 |
| ໜີ້ຕ້ອງຮັບທີ່ກ່ຽວຂ້ອງກັບຄະດີຄວາມ | 27,369 | 22,982 |
| ເງິນຝາກລະຫວ່າງທາງກັບ ທຫລ | 42,922 | - |
| ເງິນຝາກທີ່ຖືກຈຳກັດທີ່ກ່ຽວຂ້ອງກັບຄະດີຄວາມ | 38,190 | 38,190 |
| ອາກອນກຳໄລມອບລ່ວງໜ້າ | 2,977 | 755 |
| ອື່ນໆ | 787 | 759 |
| **ລວມ** | **148,616** | **102,559** |

## 11 ເງິນຝາກຂອງລູກຄ້າ

### ກ ແຍກຕາມປະເພດຂອງເງິນຝາກ

| | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | | |
| - ສະກຸນເງິນກີບ | 37,916 | 68,380 |
| - ສະກຸນເງິນຕ່າງປະເທດ | 74,959 | 105,445 |
| | **112,875** | **173,825** |
| **ເງິນຝາກປະຢັດ** | | |
| - ສະກຸນເງິນກີບ | 29,861 | 46,061 |
| - ສະກຸນເງິນຕ່າງປະເທດ | 72,180 | 33,589 |
| | **102,041** | **79,650** |
| **ເງິນຝາກມີກຳນົດ** | | |
| - ສະກຸນເງິນກີບ | 378,336 | 370,800 |
| - ສະກຸນເງິນຕ່າງປະເທດ | 669,416 | 676,696 |
| | **1,047,752** | **1,047,496** |
| **ເງິນຝາກຄ້ຳປະກັນ** | | |
| - ສະກຸນເງິນກີບ | - | - |
| - ສະກຸນເງິນຕ່າງປະເທດ | 786 | 790 |
| | **786** | **790** |
| **ໜີ້ຕ້ອງສົ່ງໃຫ້ລູກຄ້າອື່ນໆ** | | |
| - ສະກຸນເງິນກີບ | 755 | 611 |
| - ສະກຸນເງິນຕ່າງປະເທດ | 2,614 | 3,131 |
| | **3,369** | **3,742** |
| **ລວມ** | **1,266,823** | **1,305,503** |

## ຂ ແຍກຕາມອັດຕາດອກເບ້ຍ (ຕໍ່ປີ)

| | 2025 (%) | 2024 (%) |
|---|---|---|
| ເງິນຝາກກະແສລາຍວັນ ສະກຸນເງິນກີບ | 0.00 - 2.89 | 0.00 - 1.89 |
| ເງິນຝາກກະແສລາຍວັນ ສະກຸນເງິນໂດລາສະຫະລັດ | 0.00 - 1.00 | 0.20 - 0.30 |
| ເງິນຝາກກະແສລາຍວັນ ສະກຸນເງິນບາດ | 0.10 - 0.40 | 0.10 - 0.10 |
| ເງິນຝາກປະຢັດ ສະກຸນເງິນກີບ | 0.00 - 3.39 | 0.00 - 2.89 |
| ເງິນຝາກປະຢັດ ສະກຸນເງິນໂດລາສະຫະລັດ | 0.50 - 1.00 | 0.50 - 1.00 |
| ເງິນຝາກປະຢັດ ສະກຸນເງິນບາດ | 0.15 - 1.00 | 0.15 - 1.00 |
| ເງິນຝາກມີກໍານົດ ສະກຸນເງິນກີບ | 3.00 - 12.00 | 5.13 - 9.00 |
| ເງິນຝາກມີກໍານົດ ສະກຸນເງິນໂດລາສະຫະລັດ | 2.58 - 6.30 | 3.69 - 6.55 |
| ເງິນຝາກມີກໍານົດ ສະກຸນເງິນບາດ | 0.75 - 6.05 | 1.98 - 6.55 |

## 12 ກ ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນ ແຍກຕາມປະເພດຂອງເງິນຝາກ

| | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນຈາກທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ** | **171** | **258** |
| **ເງິນຝາກກະແສລາຍວັນຈາກທະນາຄານຕ່າງປະເທດ** | | |
| ທະນາຄານ ຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ | 183,076 | 175,871 |
| **ເງິນຝາກມີກໍານົດຈາກທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ** | **183,076** | **175,871** |
| ທະນາຄານໂລກ-ພະແນກ ສົ່ງເສີມທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ | 422,637 | 349,187 |
| ທະນາຄານ ແຫ່ງ ສປປ ລາວ (ກົມບໍລິການທະນາຄານ) | 38,440 | 31,345 |
| ທະນາຄານ ແຫ່ງ ສປປ ລາວ (ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນໃນ ສປປ ລາວ) | 5,880 | 5,880 |
| ບໍລິສັດ ປະກັນໄພ ບີເອັສເຣສ ລາວ ຈໍາກັດ | - | 1,431 |
| ບໍລິສັດ ຫຼັກຊັບ ແອລ໌ດີບີ ຈໍາກັດ | 3,000 | 3,000 |
| ທະນາຄານ ສົ່ງເສີມກະສິກໍາ ຈໍາກັດ | - | 44,000 |
| ທະນາຄານ ຮ່ວມພັດທະນາ | - | 20,000 |
| ບໍລິສັດ ຈໍາປາປະກັນໄພ ຈໍາກັດ | 1,443 | - |
| ບໍລິສັດ ປະກັນໄພລາວ-ຫວຽດ ຈໍາກັດ | 300 | - |
| ທະນາຄານ ຫວຽດຕິນ ລາວ ຈໍາກັດ | 42,922 | - |
| ທະນາຄານ ອາເຣັສບີ ລາວ ຈໍາກັດຜູ້ດຽວ | 21,461 | - |
| | **536,083** | **454,843** |
| **ລວມ** | **719,330** | **630,972** |

### ອັດຕາດອກເບ້ຍທີ່ໃຊ້ສໍາລັບຝາກກັບທະນາຄານອື່ນພາຍໃນປີມີດັ່ງນີ້:

| | 2025 (%) | 2024 (%) |
|---|---|---|
| ເງິນຝາກກະແສລາຍວັນ | | |
| ເງິນຝາກມີກໍານົດ ສະກຸນເງິນກີບ ທີ່ມີໄລຍະ 6 ຫາ 60 ເດືອນ | 2.50 - 10.00 | 6.50-12.00 |
| ເງິນຝາກມີກໍານົດ ສະກຸນເງິນໂດລາສະຫະລັດ ທີ່ມີໄລຍະ 3 ຫາ 24 ເດືອນ | 3.20 - 5.00 | 0.00-3.20 |



ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)
ສໍາລັບປີການບັນຊີສິ້ນສຸດ 31 ທັນວາ 2025

## 13 ໜີ້ສິນອື່ນໆ

| | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|
| ດອກເບ້ຍຄ້າງຈ່າຍ | 34,976 | 29,737 |
| ໜີ້ຕ້ອງສົ່ງໃຫ້ຜູ້ສະໜອງ | 11,370 | 15,926 |
| ໜີ້ຕ້ອງສົ່ງທີ່ກ່ຽວຂ້ອງກັບຄະດີຄວາມ | 113,810 | 20,713 |
| ອາກອນຄ້າງຊໍາລະ | 547 | 1,161 |
| ໜີ້ສິນຈາກການເຊົ່າ | - | 2,322 |
| ອື່ນໆ | 289 | 2,170 |
| **ລວມ** | **160,992** | **72,029** |

## 14 ຄັງສໍາຮອງຕາມລະບຽບການ

ຄັງສໍາຮອງຕາມລະບຽບການ ແມ່ນຮຽກເກັບໃນອັດຕາ 10% ຂອງກໍາໄລສຸດທິຕາມຂໍ້ກໍານົດຂອງ ທຫລ. ແຕ່ເນື່ອງຈາກທະນາຄານໄດ້ບັນທຶກຜົນຂາດທຶນຕາມລະບຽບກົດໝາຍສໍາລັບປີສິ້ນສຸດ 31 ທັນວາ 2025 ດັ່ງນັ້ນຈຶ່ງບໍ່ມີການເກັບຄັງສໍາຮອງຕາມລະບຽບການສໍາລັບປີນີ້.

## 15 ລາຍຮັບດອກເບ້ຍ

| | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|
| ທຸລະກໍາລະຫວ່າງທະນາຄານ | 13,634 | 10,767 |
| ເງິນກູ້ໃຫ້ແກ່ລູກຄ້າ | 152,876 | 128,786 |
| ເງິນລົງທຶນໃນຫຼັກຊັບ | 1,515 | 459 |
| ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍອື່ນໆ | 28 | 28 |
| **ລວມ** | **168,053** | **140,040** |

## 16 ລາຍຈ່າຍດອກເບ້ຍ

| | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|
| ທຸລະກໍາລະຫວ່າງທະນາຄານ | (32,821) | (22,481) |
| ເງິນຝາກລູກຄ້າ | (50,412) | (42,978) |
| ອື່ນໆ | (1,493) | (590) |
| **ລວມ** | **(84,726)** | **(66,049)** |

## 17 ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການ, ສຸດທິ

| | 2024 ລ້ານກີບ | 2023 ລ້ານກີບ |
|---|---|---|
| ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການ | | |
| ຄ່າທໍານຽມຈາກການໃຫ້ບໍລິການທາງການເງິນ | 10,910 | 13,370 |
| ຄ່າທໍານຽມຈາກການໃຫ້ບໍລິການການຊໍາລະສະສາງ | 6,668 | 23,826 |
| | **17,578** | **37,196** |
| ລາຍຈ່າຍຄ່າທໍານຽມ ແລະ ຄ່າບໍລິການ | | |
| ທຸລະກໍາລະຫວ່າງທະນາຄານ | (2,894) | (3,107) |
| ອື່ນໆ | - | (1) |
| | **(2,894)** | **(3,108)** |
| **ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການ, ສຸດທິ** | **14,684** | **34,088** |

## 18 ລາຍຮັບການດຳເນີນງານອື່ນໆ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ຄ່າທຳນຽມຈາກການໃຫ້ບໍລິການດ້ານທະນາຄານ | 2,065 | 11,536 |
| ລາຍຮັບຈາກການໃຫ້ເຊົ່າ | 3,303 | 3,084 |
| ເກັບຄືນເງິນແຮສຳລັບໜີ້ສູນ | 569 | 40 |
| ເກັບຄືນເງິນແຮທົ່ວໄປ | 177 | - |
| ອື່ນໆ | 795 | 667 |
| **ລວມ** | **6,909** | **15,327** |

## 19 ລາຍຈ່າຍການດຳເນີນງານ

### ກ ເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ຄ່າແຮງງານ ແລະ ເງິນອຸດໜູນ | 69,033 | 65,689 |
| ຄ່າປະກັນສັງຄົມ | 1,638 | 1,393 |
| ລາຍຈ່າຍເຝິກອົບຮົມ | 156 | 201 |
| ອື່ນໆ | 377 | 1,493 |
| **ລວມ** | **71,204** | **68,776** |

### ຂ ລາຍຈ່າຍໃນການບໍລິຫານອື່ນໆ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ລາຍຈ່າຍການຕະຫຼາດ ແລະ ສົ່ງເສີມການຕະຫຼາດ | 12,271 | 8,506 |
| ລາຍຈ່າຍຄ່າເຊົ່າສຳນັກງານ | 746 | 826 |
| ລາຍຈ່າຍຄ່າໂທລະຄົມມະນາຄົມ | 1,951 | 1,940 |
| ລາຍຈ່າຍຄ່າສ້ອມແປງ, ສ້ອມແປງ ແລະ ບູລະນະຄືນໃໝ່ | 9,675 | 6,897 |
| ລາຍຈ່າຍຄ່າໄຟຟ້າ ແລະ ຄ່ານ້ຳ | 1,326 | 1,348 |
| ລາຍຈ່າຍຄ່າອຸປະກອນ ແລະ ສິ່ງພິມ | 909 | 997 |
| ລາຍຈ່າຍຄ່າເດີນທາງ | 1,105 | 1,205 |
| ລາຍຈ່າຍໃນການເຝິກອົບຮົບ, ປະຊຸມ ແລະ ສຳມະນາ | 1,716 | 1,118 |
| ລາຍຈ່າຍຄ່າທຳນຽມການກວດສອບ | 9,223 | 170 |
| ອື່ນໆ | 10,935 | 7,332 |
| **ລວມ** | **49,857** | **30,339** |

### ຄ ລາຍຈ່າຍການດຳເນີນການອື່ນໆ

| | 2024<br>ລ້ານກີບ | 2023<br>ລ້ານກີບ |
|---|---|---|
| ເງິນແຮທີ່ກ່ຽວຂ້ອງກັບຄະດີຄວາມ | 94,783 | - |
| ການເກັບຄືນເງິນແຮທີ່ກ່ຽວຂ້ອງກັບຄະດີຄວາມ | (1,686) | - |
| ເງິນແຮທົ່ວໄປສຳລັບເງິນກູ້ໃຫ້ກັບທະນາຄານອື່ນ ແລະ ເງິນກູ້ຢືມ ແລະ ເງິນລ່ວງຫນ້າໃຫ້ລູກຄ້າ | - | 1,997 |
| ລາຍຈ່າຍໃຫ້ແກ່ກອງທຶນປົກປ້ອງເງິນຝາກ | 1,098 | 999 |
| **ອື່ນໆ** | 285 | - |
| | **94,480** | **2,996** |




# ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)
ສຳລັບປີການບັນຊີສິ້ນສຸດ 31 ທັນວາ 2025


## 20 ລາຍຈ່າຍອາກອນກຳໄລ

ທະນາຄານມີພັນທະທີ່ຕ້ອງຈ່າຍອາກອນກຳໄລໃນອັດຕາ 20% ຂອງກຳໄລທັງຫມົດກ່ອນຫັກອາກອນພາຍໃນປີ ໂດຍອີງຕາມກົດຫມາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019, ເຊິ່ງມີຜົນບັງຄັບໃຊ້ໃນວັນທີ ຫຼື ຫຼັງຈາກວັນທີ 1 ມັງກອນ 2020. ອາກອນກຳໄລປີ 2025 ແມ່ນຖືກຄິດໄລ່ ດັ່ງລຸ່ມນີ້:

### ຈຳນວນເງິນທີ່ຮັບຮູ້ເປັນກຳໄລຂາດທຶນ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| **ກຳໄລກ່ອນອາກອນ** | **(96,427)** | **22,487** |
| **ລາຍໄດ້ທີ່ຕ້ອງເສຍອາກອນ** | **(96,427)** | **22,487** |
| ລາຍຈ່າຍອາກອນກຳໄລໃນປີ ໃນອັດຕາຕາມກົດໝາຍ 20% | - | 4,497 |
| ອາກອນກຳໄລທີ່ຕ້ອງຊຳລະຕົ້ນປີ | (754) | (1,060) |
| ອາກອນຈ່າຍລ່ວງໜ້າທີ່ໄດ້ນຳໃຊ້ | (2,223) | - |
| ອາກອນກຳໄລທີ່ຈ່າຍພາຍໃນປີ | - | (4,191) |
| **(ມອບລ່ວງໜ້າ) / ໜີ້ຕ້ອງສົ່ງອາກອນກຳໄລທ້າຍປີ** | **(2,977)** | **(754)** |

### ການຂາດທຶນທາງອາກອນຍົກຍອດໄປ

ໃນວັນທີ 31 ທັນວາ 2025, ທະນາຄານມີການຂາດທຶນທາງອາກອນທີ່ບໍ່ໄດ້ໃຊ້ຈຳນວນ 96,427 ລ້ານກີບ (2024: ບໍ່ມີ), ເຊິ່ງເກີດຂຶ້ນຈາກການຂາດທຶນທາງອາກອນຂອງປີປັດຈຸບັນ. ອີງຕາມກົດໝາຍວ່າດ້ວຍອາກອນລາຍໄດ້, ການຂາດທຶນເຫຼົ່ານີ້ອາດຈະຖືກຍົກໄປເປັນໄລຍະເວລາ ສາມປີຕິດຕໍ່ກັນ ແລະ ຈະໝົດກຳນົດໃນປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2028, ຖ້າບໍ່ໄດ້ນຳໃຊ້.

ທະນາຄານບໍ່ໄດ້ຮັບຮູ້ຊັບສິນອາກອນເຍື່ອນຊຳລະ ທີ່ກ່ຽວກັບການຂາດທຶນທາງອາກອນເຫຼົ່ານີ້ ເນື່ອງຈາກຄວາມບໍ່ແນ່ນອນກ່ຽວກັບຄວາມພ້ອມຂອງອາກອນກຳໄລໃນອະນາຄົດທີ່ພຽງພໍພາຍໃນໄລຍະເວລາຍົກໄປ.

ເນື່ອງຈາກການນຳໃຊ້ກົດຫມາຍວ່າດ້ວຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫຼາຍປະເພດເຊິ່ງອາດຈະຕີຄວາມໄດ້ຫຼາຍຢ່າງ, ຈຳນວນເງິນທີ່ລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 21 ການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ປະກອບດ້ວຍການເຄື່ອນໄຫວທີ່ທັງໝົດ ທີ່ດຳເນີນງານທັງໝົດທີ່ກ່ຽວຂ້ອງກັນຄູ່ສັນຍາກັບພາກສ່ວນອື່ນໆ ທີ່ກ່ຽວຂ້ອງກັບທະນາຄານ. ພາກສ່ວນທີ່ຈະກ່ຽວຂ້ອງກັບທະນາຄານ ຕ້ອງມີ:

(ກ) ພົວພັນທາງກົງ ຫຼື ທາງອ້ອມໂດຍຜ່ານພາກສ່ວນໜຶ່ງ ຫຼື ຫຼາຍພາກສ່ວນທີ່ກ່ຽວຂ້ອງ:
- ຄວບຄຸມ, ຖືກຄວບຄຸມໂດຍ ຫຼື ຢູ່ພາຍໃຕ້ການຄວບຄຸມຮ່ວມກັນກັບທະນາຄານ (ລວມມີສຳນັກງານໃຫຍ່, ສາຂາ ແລະ ຄູ່ສາຂາ);
- ມີອັດຕາດອກເບ້ຍຂອງທະນາຄານ ທີ່ມີອິດທິພົນສູງຕໍ່ສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມທະນາຄານ

(ຂ) ພາກສ່ວນທີ່ເປັນຜູ້ຮ່ວມທຶນເຊິ່ງໃນນັ້ນທະນາຄານເປັນຮຸ້ນສ່ວນ

(ຄ) ພາກສ່ວນທີ່ເປັນສະມາຊິກຄົນສຳຄັນໃນຄະນະຜູ້ບໍລິຫານຂອງທະນາຄານ ຫຼື ບໍລິສັດແມ່

(ງ) ພາກສ່ວນທີ່ເປັນສະມາຊິກ ຕິດແທດກັບຄອບຄົວຂອງບຸກຄົນທີ່ກ່ຽວພັນກັບຂໍ້ (ກ) ຫຼື (ງ)

(ຈ) ພາກສ່ວນທີ່ເປັນຂອງທະນາຄານຄຸ້ມຄອງດູແລ. ຄຸ້ມຄອງຮ່ວມກັນ ຫຼື ມີອິດທິພົນສູງໂດຍ. ຫຼື ອຳນາດໃນການ ລົງຄະແນນຫຼັກທີ່ແນ່ນອນໃນທະນາຄານໃນທາງກົງ ຫຼື ທາງອ້ອມ ຫຼື ບຸກຄົນທີ່ກ່ຽວຂ້ອງທີ່ໄດ້ສະແດງໃນຂໍ້ (ຄ) ຫຼື (ງ)

(ສ) ພາກສ່ວນທີ່ເປັນແຜນຜົນປະໂຫຍດຂອງພະນັກງານຫຼັກຂອງທະນາຄານ ຫຼື ທະນາຄານອື່ນໆທີ່ກ່ຽວຂ້ອງກັບທະນາຄານ;

## ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)

ສຳລັບປີການບັນຊີສິ້ນສຸດ 31 ທັນວາ 2025

### ທຸລະກຳທີ່ສຳຄັນຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ໃນປີ 2025 ແລະ 2024 ມີດັ່ງລຸ່ມນີ້:

| ພາກສ່ວນທີ່ກ່ຽວຂ້ອງ | ຄວາມສຳພັນ | ລາຍການ | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|---|---|
| ທະນາຄານ ຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ | ສຳນັກງານໃຫຍ່ | ເງິນຝາກກັບສຳນັກງານໃຫຍ່<br>ເງິນຝາກຈາກສຳນັກງານໃຫຍ່ | 365,319<br>(183,076) | 255,288<br>(175,871) |
| ທະນາຄານ ໄຊງ່ອນເທືອງຕິ່ນ ສາຂາກຳປູເຈຍ | ບໍລິສັດໃນເຄືອ | ເງິນຝາກ | 3 | 3 |
| ທະນາຄານ ຊາຄອມແບັງ ຣິມິແທນສ ເອັກສເພຣສ | ບໍລິສັດໃນເຄືອ | ລາຍຮັບ | 366 | 48 |

### ທຸລະກຳທີ່ສຳຄັນຂອງຜູ້ບໍລິຫານຫຼັກທີ່ປະຈຳຢູ່ທະນາຄານ:

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ເງິນເດືອນ | 13,610 | 12,922 |

### 22 ລາຍການນອກໃບລາຍງານຖານະທາງການເງິນ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ຄຳໝັ້ນສັນຍາການຄ້ຳປະກັນທີ່ໄດ້ໃຫ້ກັບລູກຄ້າ | 51,732 | 53,172 |
| **ຫຼັກຊັບຄ້ຳປະກັນ ແລະ ຈຳນອງ** | | |
| ຫຼັກຊັບຄ້ຳປະກັນ ແລະ ຈຳນອງສຳລັບເງິນກູ້ໃຫ້ລູກຄ້າ | 3,992,507 | 4,474,155 |
| ຫຼັກຊັບຄ້ຳປະກັນ ແລະ ໜັງສືຄ້ຳປະກັນ | 39,900 | 46,221 |
| **ລວມ** | **4,032,407** | **4,520,376** |

### 23 ການດຳເນີນຄະດີ

ໃນວັນທີ 31 ທັນວາ 2025, ທະນາຄານກຳລັງດຳເນີນຄະດີທາງກົດໝາຍບາງລາຍ ເຊິ່ງເກີດຂຶ້ນໃນລະຫວ່າງການດຳເນີນທຸລະກິດຕາມປົກກະຕິ. ສະຖານະຂອງຄະດີຄວາມທີ່ສຳຄັນດັ່ງກ່າວໄດ້ສະຫຼຸບໄວ້ດັ່ງລຸ່ມນີ້.

| ຂໍ້ຫາ | ຄວາມຄືບໜ້າ |
|---|---|
| - ຂໍ້ຂັດແຍ່ງຂອງລູກຄ້າ<br>- ການຮຽກຮ້ອງຄ່າເສຍຫາຍ | ໃນວັນທີ 18 ພະຈິກ 2021, ໂຈດໄດ້ຍື່ນຄຳຮ້ອງທຸກທາງອາຍາຕໍ່ທະນາຄານ. ສານຊັ້ນຕົ້ນໄດ້ຕັດສິນໃຫ້ໂຈດຊະນະ ແລະ ສັ່ງໃຫ້ທະນາຄານຈ່າຍຄ່າເສຍຫາຍ. ອີງຕາມຄຳຕັດສິນຂອງສານ, ທະນາຄານໄດ້ຮັບຮູ້ເງິນແຮໃນງົບການເງິນຂອງຕົນ. ປັດຈຸບັນ, ທະນາຄານກຳລັງຢູ່ໃນຂັ້ນຕອນການອຸທອນຄຳຕັດສິນດັ່ງກ່າວ. |



## ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)

ສຳລັບປີການບັນຊີສິ້ນສຸດ 31 ທັນວາ 2024

### 24 ລາຍການນອກໃບລາຍງານຖານະທາງການເງິນ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ເງິນສົດ | 23,012 | 26,620 |
| ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ | 199,683 | 268,717 |
| ເງິນຝາກກະແສລາຍວັນກັບທະນາຄານອື່ນ | 378,024 | 255,667 |
| ລວມ | **600,719** | **551,004** |

### 25 ເຫດການທີ່ເກີດຂຶ້ນພາຍຫຼັງປີສິ້ນສູດລາຍງານການເງິນ

ນອກຈາກທີ່ໄດ້ເປີດເຜີຍຢູ່ ໃນບົດລາຍງານການເງິນເຫຼົ່ານີ້, ນະວັນທີເອກະສານລາຍງານສະບັບນີ້ ບໍ່ມີເຫດການໃດເກີດຂຶ້ນພາຍຫຼັງວັນທີ 31 ທັນວາ 2025 ທີ່ສົ່ງຜົນກະທົບຢ່າງມີສາລະສຳຄັນຕໍ່ຖານະການເງິນຂອງທະນາຄານນະວັນທີ 31 ທັນວາ 2025.



**SACOMBANK LAO**

Whatsapp: 020 9611 6868 Hotline: 1686